ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ກໍລະກົດ 2022
ປີທີ 11
ສະບັບທີ 859

## ສະພາແຫ່ງຊາດ ລາວ-ຫວຽດນາມ ແລກປ່ຽນບົດຮຽນກ່ຽວກັບເສດຖະກິດ ແລະ ການເງິນ



ໜ້າ 2

## ຊີວິດ ແລະ ເສັ້ນທາງສູ່ການປະຕິວັດຂອງປະທານ ສຸພານຸວົງ

ເນື່ອງໃນໂອກາດວັນເກີດປະທານ ສຸພານຸວົງ ຄົບຮອບ 113 ປີ (13/07/1909-13/07/2022)

ໂດຍ: ທອມສະນິດ



ເພື່ອລະນຶກເຖິງນຶກວັນເກີດຂອງປະທານ ສຸພານຸວົງ ຄົບຮອບ 113 ປີ ໃນບົດຂຽນນີ້ຂ້າພະເຈົ້າຂໍຍົກບັນຫາ ຊີວິດ ແລະ ພາລະກິດປະຕິວັດອັນຍິ່ງໃຫຍ່ຂອງປະທານ ສຸພານຸວົງ ຂຶ້ນມາ ເພື່ອເປັນການທວນຄືນເຖິງພາລະກິດປະຕິວັດຂອງທ່ານ ແລະ ເປັນການເລົ່າຄືນປະຫວັດສາດ ເພື່ອໃຫ້ຜູ້ອ່ານ ແລະ ລູກຫລານຜູ້ເກີດໃໝ່ໃຫຍ່ລຸນ ໄດ້ຮັບຮູ້ເຖິງວິລະກຳອັນລ້ຳຄ່າຂອງຜູ້ອົງອາດກ້າແກ່ນທີ່ເດີນຕາມເສັ້ນທາງຂອງພັກຢ່າງສຸດກົກສຸດປາຍ ແລະ ມີຄວາມເຊື່ອໝັ້ນຢ່າງໜັກແໜ້ນຕໍ່ອຸດົມການສັງຄົມນິຍົມ. ຜ່ານເສັ້ນທາງການປະຕິວັດເພື່ອປົດປ່ອຍປະເທດຊາດທີ່ແສນລຳບາກ ແລະ ລະອິດລະອ້ຽວ, ປະທານ ສຸພານຸວົງ ໄດ້ເປັນແບບຢ່າງຕົວຈິງອັນລ້ຳຄ່າໃຫ້ແກ່ຄົນຮຸ້ນຫລັງໄດ້ເອົາເປັນແບບຢ່າງ ໃນການດຳລົງຊີວິດ ແລະ ການເຄື່ອນໄຫວພາລະກິດປະຕິວັດຂອງທ່ານ.

ປະທານ ສຸພານຸວົງ ເກີດເມື່ອ

ອ່ານຕໍ່ໜ້າ 7

## ຕັ້ງໜ້າຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ປາກົດຜົນເປັນຈິງ

ໂດຍ: ສີວັນ

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ພາຍຫລັງດຳເນີນມາເປັນເວລາ 20 ວັນ (13/6-8/7/2022) ໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ພາຍໃຕ້ການເປັນປະທານຂອງ ພະນະທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ

ກອງປະຊຸມ ໄດ້ບັນລຸຜົນສຳເລັດ ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ໂດຍໄດ້ພິຈາລະນາ ແລະ ຮັບຮອງເອົາຫລາຍເອກະສານສຳຄັນ ຄື:

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022 ເຊິ່ງໄດ້ຕີລາຄາສູງຕໍ່ຄວາມພະຍາຍາມຂອງລັດຖະບານ ໃນການສູ້ຊົນເຮັດ ໃຫ້ອັດຕາການເຕີບໂຕດ້ານເສດຖະກິດສາມາດບັນລຸ 4,3%, ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ.

ກອງປະຊຸມ ໄດ້ຟັງການລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ. ກອງປະຊຸມສະເໜີໃຫ້ລັດຖະບານເພີ່ມທະວີການໂຄສະນາ, ປຸກລະດົມ

ອ່ານຕໍ່ໜ້າ 2

## ກປຊສ ມອບອຸປະກອນໄອທີ ໃຫ້ສະພາປະຊາຊົນແຂວງຫລວງນ້ຳທາ



(ສພຊ) ໃນວັນທີ 6 ກໍລະກົດຜ່ານມາ, ທີ່ຫ້ອງປະຊຸມສະພາແຫ່ງຊາດ ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສະພາແຫ່ງຊາດ ໄດ້ມອບເຄື່ອງອຸປະກອບໄອທີປະກອບມີ ຄອມພິວເຕີໂນດບຸກ ຈຳນວນ 4 ໜ່ວຍ ແລະ ອຸປະກອນຄອມພິວເຕີ ຈຳນວນ 4 ຊຸດ ໃຫ້ສະພາປະຊາຊົນແຂວງຫລວງນ້ຳທາ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະທີ່ກ່ຽວຂ້ອງ;

ອ່ານຕໍ່ໜ້າ 2

## ກວທສ ສາມາດຍາດໄດ້ຜົນງານພົ້ນເດັ່ນຫລາຍດ້ານ



ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ໃນວັນທີ 22 ມິຖຸນາຜ່ານມາ, ທີ່ສະພາແຫ່ງຊາດ ກ່ຽວກັບບັນດາຜົນງານການເຄື່ອນໄຫວວຽກງານຂອງກຳມາທິການວັດທະນະທຳ-ສັງຄົມ (ກວທສ) ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ຈົນເຖິງປັດຈຸບັນ ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ອີງຕາມມະຕິຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກວທສ ໃນຖານະເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ, ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການຄົ້ນຄວ້າບັນຫາສຳຄັນພື້ນຖານຂອງປະເທດຊາດ, ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ການຄົ້ນຄວ້າປະກອບຄຳເຫັນກ່ຽວກັບການ

ອ່ານຕໍ່ໜ້າ 3

## ມອບ-ຮັບ ປື້ມການຮ່ວມມືລາວ-ຫວຽດນາມ 375 ຫົວ



(ສພຊ) ເພື່ອເປັນການປະກອບສ່ວນສະເຫລີມສະຫລອງວັນປະຫວັດສາດຂອງ 2 ຊາດລາວ-ຫວຽດນາມ, ກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ໂດຍສຳນັກພິມ ແລະ ຈັດຈຳໜ່າປື້ມແຫ່ງລັດ ໄດ້ມອບປື້ມການຮ່ວມມືລາວ-ຫວຽດນາມ ຈຳນວນ 375 ຫົວ ປະກອບມີ 15 ຫົວເລື່ອງ ລວມມີ 25 ຊຸດ ໃຫ້ສະພາແຫ່ງຊາດ ເພື່ອນຳໃຊ້ເຂົ້າໃນ

ອ່ານຕໍ່ໜ້າ 2



ໜ້າ 4



ໜ້າ 4



ໜ້າ 4




ໜ້າ 7



ໜ້າ 5



ໜ້າ 4

ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ຢ່າງສຸດໃຈ!

## ຕັ້ງໜ້າ...

ໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ ແລະ ເຂົ້າຮ່ວມຢ່າງຕັ້ງໜ້າ ເພື່ອເຮັດໃຫ້ປະເທດຊາດ ຫລຸດພົ້ນອອກຈາກຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ກໍຄືບັນຫາຢາເສບຕິດໃຫ້ຫລຸດໜ້ອຍຖອຍລົງເລື້ອຍໆ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ເຊິ່ງເປັນຄັ້ງທຳອິດ ທີ່ໄດ້ມີການປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນຳເຂົ້າມາພິຈາລະນາ ໃນກອງປະຊຸມສະພາແຫ່ງຊາດ ນັບແຕ່ໄດ້ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນມາ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ, ປັບປຸງການເຄື່ອນໄຫວຂອງລັດວິສາຫະກິດ ໃຫ້ມີປະສິດທິຜົນ, ບໍ່ສ້າງໜີ້ສິນເພີ່ມແກ່ລັດຖະບານ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເພື່ອແນໃສ່ກະຕຸກຊຸກຍູ້ການຜະລິດ, ການຄ້າ ແລະ ການບໍລິການຂອງຂະແໜງການປິ່ນອ້ອມ ໃຫ້ສາມາດດຶງດູດນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ, ສາມາດສ້າງລາຍຮັບເງິນຕາຕ່າງປະເທດເຂົ້າສູ່ງົບປະມານ, ປະກອບສ່ວນຕອບສະໜອງເງິນຕາໃຫ້ແກ່ປະເທດ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການປັບປຸງຄຸນນະພາບລະບົບການຮຽນ-ການສອນ ທຸກຂັ້ນທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ .

ກອງປະຊຸມ ໄດ້ຟັງການລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການຕິດຕາມກວດກາການນຳໃຊ້ 7 ມາດຕະການ ສະກັດກັ້ນຂອງອົງການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໂດຍສະເພາະການແກ້ໄຂການລະເມີດກົດໝາຍ ໃນການພາຕົວ, ກັກຕົວ, ຈັບຕົວ ແລະ ການກັກຂັງພາງ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາ ກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບຜົນການຕິດຕາມກວດກາວາລະແຫ່ງຊາດ ໃນໄລຍະຜ່ານມາ ແລະ ແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ກ່ຽວກັບການປະຕິບັດວາລະແຫ່ງຊາດໃນຕໍ່ໜ້າ.

ພ້ອມກັນນີ້, ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາກົດໝາຍໃໝ່ ແລະ ປັບປຸງທັງໝົດ 9 ສະບັບ; ໃນນັ້ນ, ກົດໝາຍສ້າງໃໝ່ 3 ສະບັບຄື: ກົດໝາຍວ່າດ້ວຍວິຈິດສິນ, ກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ, ກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ. ກົດໝາຍປັບປຸງ 6 ສະບັບຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

ກອງປະຊຸມ ຍັງໄດ້ຮັບຟັງການລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຍົກຍ້າຍ, ແຕ່ງຕັ້ງຮອງປະທານກຳມາທິການຈຳນວນໜຶ່ງຂອງສະພາແຫ່ງຊາດ ແລະ ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດທີ່ວ່າງລົງ. ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ແລະ ເລືອກຕັ້ງເອົາທ່ານ ວຽງທະວິສອນ ເທບພະຈັນ ເປັນປະທານອົງການກວດສອບແຫ່ງລັດຄົນໃໝ່. ພິຈາລະນາຮັບຮອງເອົາການແຕ່ງຕັ້ງຮອງນາຍົກລັດຖະມົນຕີ ຄື: ທ່ານ ພົນເອກ ວິໄລ ຫລ້າຄຳຟອງ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ທ່ານ ສະເຫລີມໄຊ ກົມມະສິດ ເປັນຮອງນາຍົກລັດຖະມົນຕີ ທັງເປັນລັດຖະມົນຕີກະຊວງການຕ່າງປະເທດ. ຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ຄຳແພງ ໄຊສົມແພງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄປເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປລາວ ໄປເປັນລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ແຕ່ງຕັ້ງທ່ານ ມະໄລທອງ ກົມມະສິດ ເປັນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ບຸນເຫລືອ ສິນໄຊວໍຣະວົງ ຮອງລັດຖະມົນຕີກະຊວງການເງິນ ໄປເປັນຜູ້ວ່າການທະນາຄານແຫ່ງ ສປປລາວ.

ນອກຈາກນີ້, ກອງປະຊຸມ ຍັງໄດ້ຮັບຟັງການຊີ້ແຈງ ຕໍ່ຄຳຊັກຖາມທີ່ສະມາຊິກສະພາແຫ່ງຊາດ ກໍຄືປະຊາຊົນບັນດາເຜົ່າ ທີ່ມີຄວາມສົນໃຈຫລາຍຈາກທ່ານນາຍົກລັດຖະມົນຕີ, ບັນດາຮອງນາຍົກລັດຖະມົນຕີ ແລະ ບັນດາລັດຖະມົນຕີ, ຜູ້ວ່າການທະນາຄານແຫ່ງ ສປປລາວ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ. ກອງປະຊຸມມີຄວາມເຊື່ອໝັ້ນວ່າ: ແຕ່ລະພາກສ່ວນຈະສືບຕໍ່ເສີມຂະຫຍາຍຜົນສຳເລັດທີ່ຍາດມາໄດ້ໃນປີຜ່ານມາ, ສູ້ຊົນຈຳກັດ ແລະ ປັບປຸງແກ້ໄຂບັນດາຈຸດອ່ອນ, ສິ່ງກີດຂວາງໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ຕິດພັນກັບການຍູ້ແຮງຂະບວນການແຂ່ງຂັນຮັກຊາດພັດທະນາ ເພື່ອສ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງຈະແຈ້ງ, ສືບຕໍ່ຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ IX ໂດຍສະເພາະຢ່າງຍິ່ງ 2 ວາລະແຫ່ງຊາດ ໃຫ້ເປັນຮູບປະທຳ ແລະ ມີໝາກຜົນຕົວຈິງຫລາຍຂຶ້ນ.

## ສະພາແຫ່ງຊາດ...

(ສພຊ) ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ; ເພື່ອປະກອບສ່ວນສະເຫລີມສະຫລອງປີສາມັກຄີມິດຕະພາບ ລະຫວ່າງ ລາວ-ຫວຽດນາມ-ລາວ ປີ 2022 ຄື: ວັນຄົບຮອບ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ແລະ 45 ປີ ແຫ່ງການເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ລະຫວ່າງ ລາວ-ຫວຽດນາມ ແລະ ແລກປ່ຽນບົດຮຽນກັບສະພາແຫ່ງຊາດຫວຽດນາມ ໃນຫົວຂໍ້: "ບົດຮຽນການພິຈາລະນາຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ໂດຍສະເພາະແຜນຈັດສັນງົບປະມານໂຄງການລົງທຶນຂອງລັດ (ການຕິດຕາມກວດກາໃນຂົງເຂດແຜນການ, ການເງິນ ແລະ ກວດສອບ) ແລະ ບົດຮຽນກ່ຽວກັບການແກ້ໄຂຄຳຮ້ອງ, ຂໍ້ສະເໜີ ຂອງລັດຖະບານ, ນັກລົງທຶນ ແລະ ປະຊາຊົນ".

ສະພາແຫ່ງຊາດຫວຽດນາມ ແລະ ສະພາແຫ່ງຊາດລາວ ຮ່ວມກັນຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນກ່ຽວກັບເສດຖະກິດ ແລະ ການເງິນ ໃນຕອນບ່າຍຂອງວັນທີ 12 ກໍລະກົດ 2022 ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດຫວຽດນາມ ນະຄອນຫລວງຮ່າໂນ້ຍ ສສ.ຫວຽດນາມ ໂດຍການເປັນປະທານຮ່ວມຂອງທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດແຫ່ງ ສປປລາວ ແລະ ທ່ານ ຫງຽນ ດຶກ ຫາຍ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ. ເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນຄັ້ງນີ້ ມີບັນດາທ່ານປະທານ-ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ບັນດາຮອງລັດຖະມົນຕີທີ່ກ່ຽວຂ້ອງ, ຊ່ຽວຊານ, ຄະນະກົມ ແລະ ພະນັກງານທີ່ກ່ຽວຂ້ອງຂອງສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ.

ໃນໂອກາດກ່າວເປີດກອງປະຊຸມສຳມະນາຄັ້ງນີ້, ທ່ານ ສົມມາດ ພົລເສນາ ໄດ້ຍົກໃຫ້ເຫັນວ່າ ປີ 2022 ເປັນປີ ທີ່ມີຄວາມໝາຍຄວາມສຳຄັນທີ່ເຕັມໄປດ້ວຍຫລາຍກິດຈະກຳສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລະຫວ່າງລາວ-ຫວຽດນາມ ຄົບຮອບ 45 ປີ ແລະ ເປັນປີສາມັກຄີມິດຕະພາບລາວ-ຫວຽດນາມ ເຊິ່ງກອງປະຊຸມສຳມະນາຄັ້ງນີ້ກໍເປັນກິດກຳໜຶ່ງເພື່ອປະກອບສ່ວນສະເຫລີມສະຫລອງວັນສຳຄັນດັ່ງກ່າວ ເພື່ອຮັບປະກັນໃຫ້ບັນລຸຄາດໝາຍທີ່ວາງໄວ້; ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມ ຈົ່ງພ້ອມກັນຄົ້ນຄວ້າແລກປ່ຽນບົດຮຽນນຳກັນໃນດ້ານນິຕິບັນຍັດ, ຕິດຕາມກວດກາໃນຂົງເຂດເສດຖະກິດ-ສັງຄົມ, ງົບປະມານ, ເງິນຕາ ແລະ ການລົງທຶນ.

ກ່ອນການເຂົ້າຮ່ວມສຳມະນາຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ໄປແລກປ່ຽນບົດຮຽນນຳກະຊວງການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ທະນາຄານແຫ່ງ ສສ.ຫວຽດນາມ ຢູ່ນະຄອນຫລວງຮ່າໂນ້ຍ ພ້ອມທັງເກັບກຳຂໍ້ມູນທີ່ຈຳ ເປັນເພື່ອມາແລກປ່ຽນຢູ່ກອງປະຊຸມສຳມະນາໃນຄັ້ງນີ້ດ້ວຍ.

## ມອບ-ຮັບ...

ຫ້ອງສະໝຸດຂອງສະພາແຫ່ງຊາດແລະມອບໃຫ້ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ສະພາແຫ່ງຊາດ, ກົມເລຂານຸການ ຄະນະເລຂາທິການສະພາແຫ່ງຊາດ ແລະ ເຂດເລືອກຕັ້ງຕ່າງໆໃນທົ່ວປະເທດ.

ການມອບ-ຮັບໃນຄັ້ງນີ້, ແມ່ນມອບໂດຍທ່ານ ນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຮັບໂດຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ, ມີຄະນະຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ໂອກາດດຽວກັນນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ມອບໃບຍ້ອງຍໍໃຫ້ກະຊວງຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ທີ່ໄດ້ມີຜົນງານດີເດັ່ນໃນການປະກອບສ່ວນທີ່ສຳຄັນໃນຄັ້ງນີ້ ເຊິ່ງຕາງໜ້າຮັບໂດຍທ່ານ ນາງ ສວນສະຫວັນ ວິຍະເກດ.

(ນາງ ປາກາລັກ ພົມມີໄຊ)

## ກປຊສ

ກ່າວມອບໂດຍທ່ານ ພົຕ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ແລະ ກ່າວຮັບໂດຍທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫລວງນ້ຳທາ ພິທີມອບ-ຮັບດັ່ງກ່າວ ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ຮອງປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ, ບັນດາທ່ານ ສະມາຊິກສະພາແຫ່ງຊາດ, ຮອງເລຂາທິການສະພາປະຊາຊົນແຂວງຫລວງນ້ຳທາ, ຫົວໜ້າກົມປ້ອງກັນຊາດ, ກົມປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ.

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ທອມສະນິດ**

❑ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ອອກແຈ້ງການແນະນຳກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ສຳລັບຜູ້ອອກແຮງງານຢູ່ ສປປລາວ ຄັ້ງທີ 1 ປັບຂຶ້ນຈາກ 1.100.000 ກີບ ມາເປັນ 1.200.000 ກີບ ຕໍ່ຄົນຕໍ່ເດືອນ ຫລື ເທົ່າກັບ 46.154 ກີບຕໍ່ຄົນຕໍ່ວັນ ຫລື ເທົ່າກັບ 5.769 ກີບ ຕໍ່ຄົນຕໍ່ຊົ່ວໂມງ ໂດຍມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ສິງຫາ 2022 ຫາ 30 ເມສາ 2023 ເປັນຕົ້ນໄປ, ທັງນີ້ກໍເພື່ອເປັນການປັບປຸງຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານທີ່ເຮັດວຽກໃນຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ ທັງໃນ ແລະ ນອກລະບົບ ແລະ ຜູ້ເຮັດວຽກໃນຄົວເຮືອນໃຫ້ດີຂຶ້ນກວ່າເກົ່າ ພ້ອມທັງໄດ້ຮັບຄ່າຕອບແທນຈາກການເຮັດວຽກຢ່າງເໝາະສົມ, ຍຸຕິທຳ ກັບລາຍໄດ້ທີ່ຕົນຄວນຈະໄດ້ຮັບ ແລະ ເປັນການເພີ່ມປະສິດທິພາບໃນການຜະລິດໃຫ້ສູງຂຶ້ນ. ສ່ວນການປັບປຸງຄ່າແຮງງານຂັ້ນຕ່ຳ ຄັ້ງທີ 2 ຈາກ 1.200.000 ກີບ ມາເປັນ 1.300.000 ກີບ ຕໍ່ຄົນຕໍ່ເດືອນ ຫລື ເທົ່າກັບ 50.000 ກີບຕໍ່ຄົນຕໍ່ວັນ ຫລື ເທົ່າກັບ 6.250 ກີບ ຕໍ່ຄົນຕໍ່ຊົ່ວໂມງ ແມ່ນມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ພຶດສະພາ 2023 ເປັນຕົ້ນໄປ.

**ນສພ. ປະເທດລາວ 11/07/2022**

❑ ສຳລັບຕົວເລກຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍໃນທົ່ວປະເທດ ນັບແຕ່ຕົ້ນປີ 2022 ເປັນຕົ້ນມາ ຈຳນວນຜູ້ຕິດເຊື້ອພະຍາດໄຂ້ຍຸງລາຍສະສົມມີ 7.397 ຄົນ ເສຍຊີວິດແລ້ວ 10 ຄົນ, ໃນນີ້ ແຂວງທີ່ຕິດເຊື້ອຫລາຍກວ່າໝູ່ແມ່ນນະຄອນຫລວງວຽງຈັນ ສູງເຖິງ 3.804 ຄົນ, ສາລະວັນ 723 ຄົນ, ເຊກອງ 652 ຄົນ, ອັດຕະປື 528 ຄົນ, ຫລວງນ້ຳທາ 428 ຄົນ, ສະຫວັນນະເຂດ 293 ຄົນ ແລະ ຫລວງພະບາງ 236 ຄົນ; ສ່ວນແຂວງທີ່ມີຜູ້ເສຍຊີວິດຈາກພະຍາດດັ່ງກ່າວມີ: ນະຄອນຫລວງວຽງຈັນ 5 ຄົນ, ສາລະວັນ 2 ຄົນ, ອັດຕະປື 1 ຄົນ, ອຸດົມໄຊ 1 ຄົນ ແລະ ຊຽງຂວາງ 1 ຄົນ ສຳລັບແຂວງອື່ນໆ ແມ່ນຍັງບໍ່ທັນມີການລາຍງານຂອງຜູ້ເສຍຊີວິດຈາກພະຍາດໄຂ້ຍຸງລາຍເທື່ອ.

**ນສພ. ປະເທດລາວ 110/7/2022**

❑ ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ສົມທົບກັບອົງການປົກຄອງທ້ອງຖິ່ນທົ່ວປະເທດ ກະກຽມແຜນການ ແລະ ຂະບວນການປ່ອຍປາ, ສັດນ້ຳ ແລະ ສັດປ່າ ເພື່ອຄືນຄວາມອຸດົມສົມບູນສູ່ທຳມະຊາດ ແລະ ລົງສູ່ແຫລ່ງນ້ຳຕ່າງໆ ໂດຍມີແຜນປ່ອຍປາ ແລະ ສັດນ້ຳ ໃຫ້ໄດ້ທັງໝົດ 60 ລ້ານໂຕ ແລະ ປ່ອຍສັດປ່າຄືນສູ່ທຳມະຊາດ ໃຫ້ໄດ້ຫລາຍກວ່າ 300 ໂຕ.

**ນສພ. ປະຊາຊົນ 11/07/2022**

ກວທສ...

ໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ແລະ ຄຳສະເໜີຂອງປະຊາຊົນໃນຂົງເຂດວຽກງານສຶກສາທິການ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ວຽກງານພັດທະນາປະຊາກອນ ແລະ ການສົ່ງເສີມຄວາມສະເໝີພາບຍິງ-ຊາຍ.

ກວທສ ຂອງສະພາແຫ່ງຊາດ ຊຸດທີ IX ປະກອບມີ ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການ ຈຳນວນ 36 ທ່ານ ທີ່ປະຈຳຢູ່ແຕ່ລະເຂດເລືອກຕັ້ງໃນທົ່ວປະເທດ ແລະ ປະກອບມີກົງຈັກຊ່ວຍວຽກ 2 ກົມ, 6 ພະແນກ, ມີພະນັກງານ-ລັດຖະກອນ ທັງໝົດ 32 ທ່ານ, ຍິງ 15 ທ່ານ.

ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ຮອດປັດຈຸບັນ ກວທສ ໄດ້ປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ສາມາດຍາດໄດ້ຜົນງານທີ່ເປັນພື້ນຖານຫລາຍດ້ານ ເຊັ່ນ: ດ້ານນິຕິບັນຍັດ: ໃນແຜນການສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX ມີທັງໝົດ 96 ສະບັບ, ໃນນີ້ ມີກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ 25 ສະບັບ ແລະ ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກມາເຖິງປັດຈຸບັນ ໄດ້ພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ໃນຂົງເຂດວັດທະນະທຳ-ສັງຄົມ ສຳເລັດແລ້ວ ຈຳນວນ 3 ສະບັບ ຄື: ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ), ກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່); ພ້ອມກັນນັ້ນ, ກໍໄດ້ຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຈຳນວນໜຶ່ງທີ່ພົວພັນກັບຂົງເຂດວັດທະນະທຳ-ສັງຄົມ ເຊັ່ນ: ລັດຖະບັນຍັດຂອງປະທານປະເທດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 003/ປປທ; ໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນດ້ານວິຊາການຕໍ່ການຢັ້ງຢືນຕໍ່ສົນທິສັນຍາ, ອານຸສັນຍາ ແລະ ຂໍ້ແນະນຳຂອງອົງການແຮງງານສາກົນ (ILO) ທີ່ຕົກຄ້າງ ຕໍ່ສະພາແຫ່ງຊາດ ຈຳນວນ 5 ສະບັບ; ສຳເລັດການປັບປຸງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກວທສ; ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ 2 ກົມທີ່ເປັນກົງຈັກເສນາທິການ ແລະ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຄັ້ງນີ້ ກຳມາທິການກໍໄດ້ກະກຽມເນື້ອໃນ ແລະ ຮ່າງມະຕິ ຈຳນວນ 2 ສະບັບ ຄື: 1. ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19, 2. ຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຄາດໝາຍໃນຂົງເຂດສຶກສາ, ການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຊັ້ນ-ທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ: ຄະນະປະທານກຳມາທິການ ແລະ ບັນດາທ່ານກຳມະການຂອງ ກວທສ ໄດ້ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ, ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງປະທດຊາດ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຕາມພາລະບົດບາດດ້ວຍຄວາມຮັບຜິດຊອບສູງ; ພ້ອມນັ້ນ, ໄດ້ເອົາໃຈໃສ່ຄົ້ນຄວ້າກະກຽມເນື້ອໃນຂົງເຂດວັດທະນະທຳ-ສັງຄົມ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳ ແລະ ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະຄັ້ງ ເປັນຕົ້ນບົດປະກອບຄຳເຫັນຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໄດ້ຈຳນວນ 6 ສະບັບ; ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກວທສ ໄດ້ເອົາໃຈໃສ່ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າພິຈາລະນາບັນຫາສຳຄັນຕ່າງໆ ໃນກອງປະຊຸມຄົບຄະນະປະຈຳປີ 2021 ແລະ ໄດ້ລົງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ຢູ່ເຂດເລືອກຕັ້ງຂອງຕົນ ດ້ວຍຄວາມເປັນເຈົ້າການ.

ດ້ານການຕິດຕາມກວດກາ: ໄດ້ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ, ການຜັນຂະຫຍາຍບາງມາດຕາຂອງກົດໝາຍເປັນນິຕິກຳໃຕ້ກົດໝາຍຂອງຂະແໜງການ ແລະ ການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາແຫ່ງຊາດ ໂດຍສະເພາະແມ່ນ 15 ຄາດໝາຍໃນຂະແໜງການສຶກສາທິການ ແລະ ກິລາ, 11 ຄາດໝາຍຂອງຂະແໜງການສາທາລະນະສຸກ, 7 ຄາດໝາຍໃນຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ແລະ 6 ຄາດໝາຍໃນຂະແໜງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ອັນພົ້ນເດັ່ນແມ່ນກຳມາທິການໄດ້ເປັນເຈົ້າການຕິດຕາມກວດກາການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດໂຄວິດ-19 ຂອງລັດຖະບານຢ່າງເປັນລະບົບຕໍ່ເນື່ອງ ເຊັ່ນ: ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຮ່ວມກັບປະທານ, ຮອງປະທານ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການປະຈຳເຂດເລືອກຕັ້ງໃນຂອບເຂດທົ່ວປະເທດ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ; ໄດ້ລົງຕິດຕາມກວດກາຕົວຈິງກ່ຽວກັບການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ຢູ່ບັນດາໂຮງໝໍສູນກາງ, ໂຮງໝໍແຂວງ, ໂຮງໝໍເມືອງ, ໂຮງໝໍພາກສະໜາມ, ສະຖານທີ່ກັກກັນ, ສະຖານທີ່ເກັບຕົວຢ່າງ, ສະຖານທີ່ບໍລິການສັກວັກຊີນກັນພະຍາດໂຄວິດ-19, ໄດ້ເກັບກຳຂໍ້ມູນຂ່າວສານ ແລະ ຕິດຕາມການແກ້ໄຂຜົນກະທົບຈາກແຜ່ລະບາດຂອງພະຍາດໂຄວິດ-19 ໃນຂົງເຂດວັດທະນະທຳ-ສັງຄົມ, ທັງເປັນໃຈກາງປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນສະພາແຫ່ງຊາດ ແລະ ຄະນະສະເພາະກິດລະດັບຊາດ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວຢູ່ສະພາແຫ່ງຊາດ ເປັນຕົ້ນ ການຮັບໃຊ້ກອງປະຊຸມຄັ້ງປະຖົມມະລຶກ, ກອງປະຊຸມສະໄໝສາມັນ ແລະ ວິສາມັນຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມອື່ນໆທີ່ຈັດຂຶ້ນຢູ່ສະພາແຫ່ງຊາດ ລວມທັງການອະນາໄມຂ້າເຊື້ອຫ້ອງປະຊຸມ, ສຳນັກງານບ່ອນເຮັດວຽກຂອງສະພາແຫ່ງຊາດ, ປະສານສົມທົບກັບຄະນະສະເພາະກິດ ແລະ ກະຊວງສາທາລະນະສຸກ ເພື່ອເກັບຕົວຢ່າງຫາເຊື້ອພະຍາດໂຄວິດ-19, ການໃຫ້ວັກຊີນປ້ອງກັນພະຍາດໂຄວິດ-19 ໃຫ້ແກ່ການນຳ ແລະ ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ດ້ວຍຄວາມຮັບຜິດຊອບສູງ ແລະ ໃນ 6 ເດືອນຕົ້ນປີ 2022 ນີ້ ກຳມາທິການໄດ້ລົງຕິດຕາມກວດກາ ແລະ ລາຍງານຜົນການຕິດຕາມກວດກາຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈຳນວນ 2 ຫົວຂໍ້ຄື: 1. ການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາ, ການປັບປຸງຄຸນນະພາບການຮຽນ-ການສອນທຸກຊັ້ນທຸກສາຍໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍຍະກຳ; 2. ການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ພ້ອມນັ້ນ, ກໍໄດ້ເອົາໃຈໃສ່ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ ຈຳນວນ 11 ເລື່ອງ ແລະ ຕິດຕາມການແກ້ໄຂຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ຈຳນວນ 34 ສາຍ ໃນຂົງເຂດວັດທະນະທຳ-ສັງຄົມ; ບັນດາທ່ານກຳມະການຂອງກຳມາທິການກໍໄດ້ເຂົ້າຮ່ວມຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນຕາມພາລະບົດບາດຂອງຕົນຢ່າງຫ້າວຫັນ; ດ້ານການສ້າງຄວາມເຂັ້ມແຂງ: ໄດ້ສຳເລັດການສ້າງແຜນການສ້າງຄວາມເຂັ້ມແຂງ 5 ປີ (2021-2025) ຂອງກຳມາທິການ; ໄດ້ຈັດກອງປະຊຸມ ສ້າງຄວາມເຂັ້ມແຂງເພື່ອຍົກລະດັບຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນ ທີ່ສັງກັດ ກວທສ ປະຈຳປີ 2021, ໄດ້ຈັດກອງປະຊຸມພົບປະ ແລະ ເຮັດວຽກຮ່ວມກັບກຳມະການຂອງ ກວທສ; ໄດ້ອຳນວຍຄວາມສະດວກໃຫ້ພະນັກງານ-ລັດຖະກອນຂອງກຳມາທິການເຂົ້າຮ່ວມເຝິກອົບຮົມໄລຍະສັ້ນພາຍໃນປະເທດ ເປັນຕົ້ນຍົກລະດັບທິດສະດີການເມືອງ-ການປົກຄອງ ລະບົບ 5 ເດືອນ, ລະບົບ 45 ວັນ, ເຝິກອົບຮົມພາສາອັງກິດ, ພາສາຫວຽດນາມ ແລະ ວຽກວິຊາສະເພາະ; ດ້ານການພົວພັນຕ່າງປະເທດ: ກຳມາທິການ ໄດ້ຈັດຕັ້ງປະຕິບັດວຽກງານພົວພັນຮ່ວມມືກັບຕ່າງປະເທດຕາມແນວທາງການຕ່າງປະເທດຂອງພັກ, ໄດ້ສ້າງແຜນການເຄື່ອນໄຫວວຽກງານການຕ່າງປະເທດ 5 ປີ (2021-2025) ຂອງກຳມາທິການ; ເອົາໃຈໃສ່ເຄື່ອນໄຫວ ແລະ ເຂົ້າຮ່ວມວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ເປັນຕົ້ນກອງປະຊຸມ AIPA ຄັ້ງທີ 42 ໄດ້ຮັບຮອງເອົາ 4 ມະຕິໃນຂົງເຂດສັງຄົມ ແລະ ສະມາຊິກແຫ່ງຊາດເພດຍິງ, ໄດ້ກະກຽມ ແລະ ເຂົ້າຮ່ວມກອງປະຊຸມສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ APF; ກອງປະຊຸມ AIPA-FREELAND; ກອງປະຊຸມ AIPA CAUCUS; ກອງປະຊຸມພົບປະຮູບແບບທາງໄກລະຫວ່າງຄະນະສະມາຄົມມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ, ກອງປະຊຸມປຶກສາຫາລືກ່ຽວກັບແຜນການຮ່ວມມືລະຫວ່າງລັດຖະບານ ສປປລາວ ແລະ ອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ UNFPA ກ່ຽວກັບການປິດຮອບວຽນທີ 6 ແລະ ແຜນງານຮອບວຽນທີ 7 ປະຈຳປີ 2022-2026; ປະສານງານກັບອົງການ UNICEF, UNFPA, ຫ້ອງການປະສານງານອົງການແຮງງານ ILO ປະຈຳລາວ ເພື່ອສ້າງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ພະນັກງານ-ລັດຖະກອນ ທີ່ສັງກັດ ກວທສ; ປະທານ, ຮອງປະທານກຳມາທິການ ຍັງໄດ້ຮັບການແຕ່ງຕັ້ງເປັນຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ, ບັນດາປະເທດອາຟຣິກາ ແລະ ລັດເຊຍ; ພ້ອມນັ້ນ, ບັນດາທ່ານກຳມະການຂອງກຳມາທິການ ກໍໄດ້ຮັບການແຕ່ງຕັ້ງເຂົ້າໃນຄະນະມິດຕະພາບລັດຖະສະພາລາວ ກັບລັດຖະສະພາບັນດາປະເທດໃນພາກພື້ນ ແລະ ໃນໂລກ.



ທ່ານຍັງໄດ້ໃຫ້ຮູ້ຕື່ມອີກວ່າ: ແຕ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ມາຮອດປັດຈຸບັນ ກຳມາທິການມີຜົນສຳເລັດໃນການປະກອບສ່ວນໃຫ້ ສປປລາວ ເປັນລັດຄຸ້ມຄອງດ້ວຍລັດຖະທຳມະນູນ ແລະ ກົດໝາຍຢ່າງແທ້ຈິງຄື: ກຳມາທິການໄດ້ເອົາໃຈໃສ່ຄົ້ນຄວ້າ, ຕິດຕາມ, ຊຸກຍູ້ການສ້າງ ແລະ ປັບປຸງກົດໝາຍ, ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ເພື່ອປະກອບສ່ວນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີຄວາມສັກສິດ, ໂປ່ງໃສ ແລະ ຍຸຕິທຳ ໂດຍຕິດພັນກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງໜັກແໜ້ນ ເຊິ່ງນັບແຕ່ກອງປະຊຸມຄັ້ງປະຖົມມະລຶກມາເຖິງປັດຈຸບັນ ກວທສ ໄດ້ເປັນເຈົ້າການປະສານສົມທົບກັບກຳມາທິການກົດໝາຍ ແລະ ຂະແໜງການກ່ຽວຂ້ອງຂອງລັດຖະບານ ໃນການສ້າງ ແລະ ປັບປຸງກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ໄດ້ 3 ສະບັບ ຄື: ກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ), ກົດໝາຍວ່າດ້ວຍມໍຣະດົກແຫ່ງຊາດ (ສ້າງໃໝ່) ແລະ ກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ແລະ ນິຕິກຳໃຕ້ກົດໝາຍຂອງຂະແໜງສຶກສາທິການ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ຈຳນວນໜຶ່ງຮ້ອຍກວ່າສະບັບ.

ຜ່ານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ, ມີທັງຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ເປັນຕົ້ນ: ຂໍ້ສະດວກ ໄດ້ມີກົດໝາຍ, ມະຕິຂອງສະພາແຫ່ງຊາດ, ຂໍ້ຕົກລົງຂອງຄະນະເລຂາທິການສະພາແຫ່ງຊາດ ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ກວທສ ແລະ ໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ຊິດຈາກຄະນະພັກ, ຄະນະປະຈຳສະພາແຫ່ງຊາດ ເປັນປົກກະຕິໃນການເຄື່ອນໄຫວວຽກງານຂອງ ກວທສ; ກຳມາທິການໄດ້ມີແຜນການ, ແຜນງານ ແລະ ກິດຈະກຳ ໂດຍໄດ້ມີການແບ່ງງານ, ແບ່ງຄວາມຮັບຜິດຊອບຢ່າງລະອຽດຈະແຈ້ງ, ມີການຊຸກຍູ້, ຕິດຕາມກວດກາ ແລະ ສະຫລຸບລາຍງານຢ່າງເປັນປະຈຳ; ກົງຈັກການຈັດຕັ້ງທີ່ເປັນເສນາທິການຊ່ວຍວຽກຂອງກຳມາທິການໄດ້ຮັບການປັບປຸງ; ພະນັກງານ-ລັດຖະກອນທີ່ເປັນເສນາທິການມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການໄດ້ເປັນເຈົ້າການຜັນຂະຫຍາຍທິດທາງແຜນການຂອງກຳມາທິການເປັນອັນລະອຽດໃນຂັ້ນຂອງຕົນ ແລະ ໄດ້ນຳພາຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ, ລວມທັງໄດ້ຮັບການຮ່ວມມື, ອຳນວຍຄວາມສະດວກຈາກຂະແໜງການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການປະຕິບັດພາລະບົດບາດໜ້າທີ່ຂອງກຳມາທິການວັດທະນະທຳ-ສັງຄົມ; ຂໍ້ຫຍຸ້ງຍາກ: ການແຜ່ລະບາດຂອງພະຍາດໂຄວິດ-19 ເປັນວົງກວ້າງໃນທົ່ວປະເທດ ເຮັດໃຫ້ການຈັດຕັ້ງປະຕິບັດບາງວຽກ ແມ່ນບໍ່ສາມາດສຳເລັດຕາມແຜນການທີ່ວາງໄວ້; ລະບົບການປະສານງານ ແລະ ການລາຍງານຂໍ້ມູນຂອງຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ ໃນຂັ້ນສູນກາງ ແລະ ຈາກບັນດາເຂດເລືອກຕັ້ງ ບໍ່ທັນໄດ້ດີເທົ່າທີ່ຄວນ ໂດຍສະເພາະແມ່ນການສະຫລຸບສັງລວມ ແລະ ສະໜອງຂໍ້ມູນທີ່ມີຄຸນນະພາບໃນການພິຈາລະນາຕົກລົງບັນຫາສຳຄັນຂອງປະເທດຊາດ ໃນຂົງເຂດວັດທະນະທຳ-ສັງຄົມໃຫ້ແກ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດບໍ່ທັນເປັນປົກກະຕິ; ຄຸນນະພາບໃນການປະຕິບັດໜ້າທີ່ວິຊາສະເພາະຂອງພະນັກງານ, ລັດຖະກອນ ທີ່ເປັນເສນາທິການໃຫ້ແກ່ກຳມາທິການຍັງຈຳກັດ; ສິ່ງອຳນວຍຄວາມສະດວກ ເຊັ່ນ: ງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ການເຄື່ອນໄຫວວຽກງານບໍ່ສາມາດຕອບສະໜອງຕາມແຜນວຽກທີ່ກຳນົດໄວ້ ເຮັດໃຫ້ການເຄື່ອນໄຫວວຽກງານພົບຄວາມຫຍຸ້ງຍາກ; ຄວາມຕື່ນຕົວເປັນເຈົ້າການຄົ້ນຄ້ວາ, ຮ່ຳຮຽນ, ເຊື່ອມຊຶມ, ກຳແໜ້ນ ແລະ ສາມາດຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ທິດທາງແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ກຳມາທິການ ເຂົ້າໃນໜ້າທີ່ຄວາມຮັບຜິດຊອບຂອງຕົນ ຂອງພະນັກງານ-ລັດຖະກອນ ເປັນປັດໄຈສຳຄັນພື້ນຖານຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການເມືອງຂອງກຳມາທິການ; ການເຮັດວຽກຕ້ອງມີແຜນການລະອຽດ, ປະຕິບັດຕາມຫລັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ມີການສະຫລຸບຕີລາຄາ ເພື່ອຖອດຖອນບົດຮຽນໃນແຕ່ລະໄລຍະ ແລະ ມີຄວາມສາມັກຄີເປັນເອກະພາບພາຍໃນໃຫ້ແໜ້ນແຟ້ນເປັນບັນຫາສຳຄັນທີ່ຂາດບໍ່ໄດ້; ການເຄື່ອນໄຫວວຽກງານຕ້ອງມີການປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງຢ່າງລະອຽດ ພ້ອມທັງຕ້ອງກຳແໜ້ນວຽກງານຂອງຂະແໜງການທີ່ຢູ່ໃນຄວາມຮັບຜິດຊອບຂອງກຳມາທິການ; ເພື່ອຮັບປະກັນໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກຳມາທິການໃຫ້ມີປະສິດທິພາບ ແລະ ປະສິດທິຜົນນັ້ນ ຕ້ອງມີຄວາມສົມດຸນລະຫວ່າງແຜນວຽກ, ແຜນຄົນ ແລະ ແຜນເງິນ.

ໃນຕອນທ້າຍທ່ານຍັງໄດ້ໃຫ້ຮູ້ກ່ຽວກັບແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2022 ຂອງກຳມາທິການ ເຊິ່ງກຳມາທິການຈະສຸມໃສ່ຈັດຕັ້ງປະ

ອ່ານຕໍ່ໜ້າ 7...

## ສພຂ ຫລວງນ້ຳທາ ຍົກສູງຂີດຄວາມສາມາດທາງດ້ານໄອທີ



(ສພຊ) ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ເຝິກອົບຮົມຍົກສູງຂີດຄວາມສາມາດທາງດ້ານໄອທີ ໃຫ້ພະນັກງານ-ລັດຖະກອນ ທີ່ເປັນເສນາທິການ ສພຂ ເມື່ອເດືອນມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງທ່ານ ມີໄຊ ມີວິໄລ ກຳມະການຄະນະປະຈຳ, ເລຂາທິການ ສພຂ, ມີຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍວິຊາການພາຍໃນ ສພຂ ເຂົ້າຮ່ວມທັງໝົດ 30 ກວ່າຄົນ.

ການເຝິກອົບຮົມຄັ້ງນີ້, ກໍເພື່ອຍົກສູງຄຸນນະພາບ, ຄວາມຮູ້, ຄວາມສາມາດໃນວຽກງານຂໍ້ມູນຂ່າວສານ ແລະ ໄອທີຂອງພະນັກງານວິຊາການພາຍໃນ ສພຂ ໃນການໝູນໃຊ້ເຂົ້າໃນວຽກງານວິຊາສະເພາະຂອງຕົນໃຫ້ມີຄວາມສະດວກ, ວ່ອງໄວ ແລະ ທັນກັບຍຸກສະໄໝໃນປັດຈຸບັນ.

ໂອກາດນີ້, ທ່ານ ມີໄຊ ມີວິໄລ ໄດ້ມີຄຳເຫັນ ແລະ ກ່າວເປີດກອງປະຊຸມຂຶ້ນຢ່າງເປັນທາງການ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບການເປີດກອງປະຊຸມເຝິກອົບຮົມໃນຫົວຂໍ້ ຍົກລະດັບຂີດຄວາມສາມາດທາງດ້ານໄອທີ ໃຫ້ແກ່ພະນັກງານໃນຄັ້ງນີ້ ແລະ ຮຽກຮ້ອງໃຫ້ສຳມະນາກອນທຸກທ່ານ ຈົ່ງເອົາໃຈໃສ່ຮ່ຳຮຽນເອົາຄວາມຮູ້ໃນຫົວຂໍ້ຕ່າງໆ ທີ່ໄດ້ເຝິກອົບຮົມ ເພື່ອນຳເອົາບົດຮຽນມາໝູນໃຊ້ເຂົ້າໃນວຽກງານວິຊາສະເພາະຂອງຕົນໃຫ້ເກີດປະໂຫຍດສູງສຸດຮັບປະກັນການເປັນເສນາທິການໃຫ້ແກ່ ສພຂ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ແລະ ມີຄຸນນະພາບດີຂຶ້ນກວ່າເກົ່າ.

ຫົວຂໍ້ທີ່ນຳມາເຝິກອົບຮົມໃນຄັ້ງນີ້ປະກອບມີຄື: ການແນະນຳກ່ຽວກັບການສ້າງຈີເມວ Gmail ແລະ ການສະມັກຊື່ເຂົ້າໃນບັນຊີ Google (Google account); ແນະນຳການນຳໃຊ້ GoogleForm; ເຝິກສ້າງແບບຟອມ ແລະ ນຳໃຊ້ຕົວຈິງ; ແນະນຳກ່ຽວກັບການແປງຟາຍເອກະສານຈາກ PDF ເປັນ Word (Convert PDF to Word) ດ້ວຍ Google Lens ແລະ Google drive; ແນະນຳກ່ຽວກັບການນຳໃຊ້ລະບົບຈັດເກັບ ແລະ ຄົ້ນຫາເອກະສານ ຂອງສະພາປະຊາຊົນແຂວງ (Electronic document); ແນະນຳກ່ຽວກັບການນຳໃຊ້ສະມາດບອດ, ການສ້າງ ແລະ ເຂົ້າຮ່ວມກອງປະຊຸມທາງອອນລາຍ (Video Conference ) ໂດຍນຳໃຊ້ Zoom, google, Meet, True Conf ພ້ອມດຽວກັນວິທະຍາກອນ ແລະ ສຳມະນາກອນໄດ້ແລກປ່ຽນສົນທະນາບົດຮຽນເຊິ່ງກັນແລະກັນ ຢ່າງກົງໄປກົງມາ ເພື່ອຄວາມຮູ້, ຄວາມເຂົ້າໃຈຕໍ່ກັບບົດຮຽນ ເຮັດໃຫ້ກອງປະຊຸມໄດ້ສຳເລັດຕາມລະດັບຄາດໝາຍ.

(ນາງ ວັນນີ ແຝງບົວວັນ)

## ຄວສຜ ຕິດຕາມກວດກາວຽກງານ ຢູ່ເມືອງສະໜາມໄຊ



(ສພຊ) ໃນເດືອນມິຖຸນາຜ່ານມາ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ 2022 ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ທີ່ຫ້ອງວ່າການປົກຄອງເມືອງສະໜາມໄຊ ນຳໂດຍທ່ານ ແຫວນຄຳ ປະທຸມມະແສງ ປະທານ ຄວສຜ ພ້ອມດ້ວຍຄະນະເຂົ້າຮ່ວມມີທ່ານ ຄຳໝັ້ນ ພົມມະແສງ ຮອງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງສະໜາມໄຊ, ມີຮອງເຈົ້າເມືອງ ແລະ ຕາງໜ້າບັນດາຫ້ອງການໃນຂົງເຂດວັດທະນະທຳ-ສັງຄົມເຂົ້າຮ່ວມ.

ໂອກາດນີ້, ທ່ານ ນາງ ພູດອນ ຈູມມະລີ ຮອງເຈົ້າເມືອງສະໜາມໄຊ ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວັດທະນະທຳສັງຄົມ 6 ເດືອນຕົ້ນປີ 2022 ເຊິ່ງໃນໄລຍະຜ່ານມາເຖິງແມ່ນວ່າຈະພົບອຸປະສັກຫຍຸ້ງຍາກສັບສົນພຽງໃດ ຄະນະພັກອຳນາດການປົກຄອງເມືອງ ໄດ້ເອົາໃຈໃສ່ຊີ້ນຳນຳພາຈັດຕັ້ງຜັນຂະຫຍາຍມະຕິກອງຊຸມອົງການປົກຄອງເມືອງລົງສູ່ທ້ອງຖິ່ນຮາກຖານບ້ານ ໂດຍໄດ້ຫັນເອົາພະນັກງານຂະແໜງການເຄື່ອນໄຫວເພື່ອແກ້ໄຂບັນຫາຈຸດທີ່ຍັງຄົງຄ້າງ ແລະ ຫລໍ່ແຫລມ ເປັນຕົ້ນແມ່ນລົງເຊື່ອມຊຶມມະຕິຄຳສັ່ງ, ເອກະສານອື່ນໆ ທີ່ຕິດພັນກັບການກໍ່ສ້າງ ແລະ ສ້າງສາພັດທະນາເພື່ອແນໃສ່ເຮັດໃຫ້ປະຊາຊົນບັນດາເຜົ່າມີຄວາມຜາສຸກຢູ່ດີກິນດີຕາມທິດສັງຄົມນິຍົມແຕ່ຮາກຖານຂຶ້ນມາ. ວຽກງານສຶກສາທິການ ແລະ ກິລາເມືອງ ໄດ້ເອົາໃຈໃສ່ຊີ້ນຳນຳພາ ຈັດຕັ້ງປະຕິບັດບັນດາຄາດໝາຍຂອງການສຶກສາເພື່ອສຸມໃສ່ວຽກງານການຮຽນການສອນທີ່ຈະເຂົ້າສູ່ພາກຮຽນທີ 2, ດ້ານການຕິດຕາມ ກວດກາ, ຊຸກຍູ້ ແລະ ເຝິກອົບຮົມ, ດ້ານວຽກງານການສຶກສາກ່ອນໄວຮຽນ, ດ້ານວຽກງານປະຖົມສຶກສາ, ດ້ານວຽກງານສຶກສານອກໂຮງຮຽນ, ດ້ານປັບປຸງພື້ນຖານໂຄງລ່າງ (ສະພາບແວດລ້ອມ ແລະ ອາຄານຮຽນທີ່ບໍ່ພຽງພໍ. ວຽກງານແຮງງານ ແລະ ສະຫວັດດີການສັງຄົມ ໄດ້ກວດກາຕິດຕາມແຮງງານທີ່ມາຈາກຕ່າງເມືອງ, ຕ່າງແຂວງ ຢູ່ຕາມຫົວໜ່ວຍທຸລະກິດພາຍໃນເມືອງ ແລະ 5 ບໍລິສັດ ມີແຮງງານທັງໝົດ 1.145 ຄົນ ຍິງ 257 ຄົນ, ຈັດສົ່ງນັກສຳມະນາກອນເຂົ້າເຝິກອົບຮົມດ້ານການພັດທະນາສີມືແຮງງານ 5 ສາຂາ, ໄດ້ນະໂຍບາຍຈ່າຍເຂົ້າສານໃຫ້ຄອບຄົວໄຟໄໝ້ເຮືອນບ້ານຫາດຍາວ 100 ກິໂລກຣາມ, ຄອບຄົວອານາຖາບ້ານມິດສຳພັນ 50 ກິໂລກຣາມ, ຄອບຄົວອານາຖາບ້ານອຸດົມສຸກ 50 ກິໂລກຣາມ, ຄອບຄົວພະນັກງານເສຍຊີວິດຢູ່ບ້ານຄັງ 50 ກິໂລກຣາມ, ໄດ້ຈ່າຍສັງກະສີ ພ້ອມເຄື່ອງຄົວເຮືອນ 10 ຢ່າງໃຫ້ຄອບຄົມອານາຖາບ້ານດອນສູງ ມູນຄ່າ 2,7 ລ້ານກີບ ແລະ ອື່ນໆ. ວຽກງານສາທາໄດ້ໂຄສະນາເຜີຍແຜ່ ດ້ານສຸຂະສຶກສາອະນາໄມ 3 ສະອາດ, ການລົງສັກຢາວັກຊີນຕ່າງໆເປັນຕົ້ນ: ວັນນະໂລກ, ໂປລີໂອ, ບາດທະຍັກ, ໂຄວິດ19 ຢ່າງເປັນປົກກະຕິ, ນອກນີ້ຍັງໄດ້ລົງເຄື່ອນໄຫວ ແລະ ຊຸກຍູ້ລະບົບການບໍລິຫານຢູ່ສຸກສາລາ (ໂຮງໝໍນ້ອຍ) ເພື່ອເຮັດໃຫ້ພໍ່ແມ່ປະຊາຊົນເຂດຫ່າງໄກສອກຫລີກມີຄວາມສະດວກໃນການເຂົ້າເຖິງການບໍລິການຢ່າງທົ່ວເຖິງ.

ຈາກນັ້ນ, ກໍໄດ້ຮັບຟັງການລາຍງານຈາກພາກສ່ວນທີ່ກ່ຽວຂ້ອງ ຕໍ່ກັບຄຳເຈາະຈີ້ມຂອງ ຄວສຜ ແລະ ໄດ້ແລກປ່ຽນຄຳຄິດຄຳເຫັນ ຕໍ່ບັນດາຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດວຽກງານວັດທະນະທຳສັງຄົມຂອງເມືອງ.

ໂອກາດນີ້, ປະທານ ຄວສຜ ໄດ້ເນັ້ນໃຫ້ເອົາໃຈໃສ່ສືບຕໍ່ປະຕິບັດນະໂຍບາຍຕໍ່ວຽກງານການສຶກສາ ໃນການພັດທະນາຊັບພະຍາກອນມະນຸດຕາມ 3 ລັກສະນະ ແລະ 5 ຫລັກມູນ, ສົ່ງເສີມການສຶກສາໃນເຂດຊົນນະບົດຫ່າງໄກຊອກຫລີກ, ເຂດຈຸດສຸມຕ່າງໆ ແລະ ສືບຕໍ່ວຽກງານອື່ນໆໃນຂົງເຂດການສຶກສາໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ເອົາໃຈໃສ່ສືບຕໍ່ຄຸ້ມຄອງກວດກາຕິດຕາມແຮງງານນຳເຂົ້າ, ສືບຕໍ່ໂຄສະນາເຜີຍແຜ່ວຽກງານສາທາ ຢ່າງກວ້າງຂວາງທົ່ວເຖິງ.

(ວິນັດ)

## ຄວສຜ ເຊກອງ ຕິດຕາມກວດກາຢູ່ເມືອງດາກຈຶງ

(ສພຊ) ໃນລະຫວ່າງວັນທີ 27-28 ມິຖຸນາ 2022 ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ແຂວງເຊກອງ ເຊິ່ງນຳໂດຍທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານ ສະພາປະຊາຊົນແຂວງ (ສພຂ), ທ່ານ ນາງ ລັດດາວຽງ ຮອງປະທານ ຄວສຜ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດວັດທະນະທຳສັງຄົມ ແລະ ບັນດາເຜົ່າ ຢູ່ເມືອງດາກຈຶງ ໂດຍການຕ້ອນຮັບຂອງທ່ານ ອຸ່ນຄຳ ຫລ້າພະຈັກ ຮອງເລຂາພັກເມືອງ, ປະທານແນວລາວສ້າງຊາດເມືອງດາກຈຶງ, ມີບັນດາທ່ານຫົວໜ້າ-ຮອງຫ້ອງການໃນຂົງເຂດວັດທະນະທຳ-ສັງຄົມ, ປະທານ-ຮອງປະທານ 3 ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ການເຄື່ອນໄຫວເຮັດວຽກຄັ້ງນີ້, ແມ່ນໄດ້ຮັບຟັງກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍສະເພາະການຈັດຕັ້ງປະຕິບັດບັນດາຄາດ



ໝາຍໃນຂົງເຂດວັດທະນະທຳ-ສັງຄົມ, ບັນດາຕົວຊີ້ວັດ, ແຜນງົບປະມານ, ຂໍ້ສະດວກ-ຂໍ້ຫຍຸ້ງຍາກ ແລະ ມາດຕະການຕ່າງໆໃນການຈັດຕັ້ງປະຕິບັດວຽກງານຈາກບັນດາຂະແໜງການທີ່ກ່ຽວຂ້ອງຂອງເມືອງ ເປັນຕົ້ນແມ່ນໃນຂົງເຂດວຽກງານສຶກສາ ແລະ ກິລາ, ຂົງເຂດສາທາລະນະສຸກ, ຂົງເຂດຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂົງເຂດແຮງງານ ແລະ ສະຫວັດດີການສັງຄົມ, ຂົງເຂດວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ວຽກງານພາຍໃນ ແລະ ບັນດາອົງການຈັດຕັ້ງມະຫາຊົນ. ຈາກນັ້ນ, ກໍໄດ້ລົງເຄື່ອນໄຫວຕິດຕາມເບິ່ງສະຖານທ່ອງທ່ຽວທາງທຳມະຊາດ ທົ່ງນົມ ແລະ ສະຖານທີ່ສ້າງຕັ້ງວັດຂອງເມືອງດັ່ງກ່າວນຳອີກ.

ທັງນີ້, ກໍເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງເຊກອງ ໃນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມມະຕິຮັບຮອງຂອງກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາ 2 ຂັ້ນ ໃຫ້ໄດ້ຮັບຜົນສຳເລັດຕາມຄາດ ໝາຍທີ່ວາງໄວ້, ພ້ອມທັງເປັນການຊຸກຍູ້ ແລະ ເກັບກຳຂໍ້ມູນບັນດາປະກົດການຫຍໍ້ທໍ້ ແລະ ບັນຫາທາງສຽງສັງຄົມທີ່ເກີດຂຶ້ນຢູ່ເມືອງດາກຈຶງ ເພື່ອເປັນຂໍ້ມູນນຳໄປລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ທີ່ຈະໄດ້ໄຂຂຶ້ນໃນຕໍ່ໜ້ານີ້.

(ນັກຂ່າວ ສພຂ ເຊກອງ)



# ໄລຍະເວລາໜຶ່ງປີກວ່າ ສພຂ ໄຊຍະບູລີ ມີຜົນສຳເລັດຫລາຍດ້ານ



ທ່ານ ເພັງນິລັນ ຄຳພັນເພັງ ປະທານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, ປະທານສະພາປະຊາຊົນແຂວງໄຊຍະບູລີ ກ່າວວ່າ: ມີຄວາມຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າໃຫ້ຜູ້ມີສິດເລືອກຕັ້ງ ປະຊາຊົນແຂວງໄຊຍະບູລີ ທີ່ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນ 3 ຊຸດທີ IX ເຊິ່ງເປັນກອງປະຊຸມທີ່ມີຄວາມໝາຍສຳຄັນໃນການພິຈາລະນາຕົກລົງບັນຫາຂອງຊາດ. ທ່ານໃຫ້ຮູ້ຕື່ມອີກວ່າ: ພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ IX ມາຮອດປະຈຸບັນ ຄະນະສະມາຊິກສະພາແຫ່ງຊາດ (ຄະນະ ສສຊ) ປະຈຳເຂດເລືອກຕັ້ງ ກໍຄືສະພາປະຊາຊົນແຂວງ (ສພຂ) ໄດ້ຈັດຕັ້ງເຄື່ອນໄຫວມີຜົນສຳເລັດ ດັ່ງນີ້:

1. ຜົນງານທີ່ພົ້ນເດັ່ນຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແມ່ນໄດ້ຜັນຂະຫຍາຍມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ແລະ ສພຂ ເປັນແຜນງານ ໂຄງການດຳເນີນງານ 5 ປີ, 1 ປີ ເປັນແຕ່ລະໄລຍະ ແລະ ໄດ້ຊີ້ນຳການເຄື່ອນໄຫວເປັນປົກກະຕິ ເຊິ່ງໄດ້ຮັບປະກັນໃຫ້ແກ່ແຂວງມີຄວາມສະຫງົບ, ມີສະຖຽນລະພາບທາງດ້ານການເມືອງ ເສດຖະກິດຂອງແຂວງໃຫ້ມີທ່າອ່ຽງຂະຫຍາຍຕົວຂຶ້ນ ໃນປີ 2021 ເສດຖະກິດຂອງແຂວງເຕີບໂຕໃນຈັ່ງວະ 4,4% ລວມຍອດຜະລິດຕະພັນຕໍ່ຫົວຄົນສະເລ່ຍ 3.115 ໂດລາ; ໄດ້ປັບປຸງແບບແຜນວິທີເຮັດວຽກພາຍໃນຄະນະ ສສຊ ປະຈຳເຂດເລືອກ ເພື່ອໃຫ້ສາມາດເຄື່ອນໄຫວຕາມພາລະບົດບາດຂອງຕົນ; ສົມທົບກັບ ຄປຈ ສພຂ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ໃນເຂດເລືອກຕັ້ງຕ່າງໆພາຍໃນແຂວງ; ໄດ້ຕິດຕາມກວດກາ ແລະ ຊຸກຍູ້ບັນດາໂຄງການລົງທຶນຂອງລັດຂັ້ນສູນກາງທີ່ກ່ຽວຂ້ອງ ທີ່ຈັດຕັ້ງປະຕິບັດຢູ່ພາຍໃນແຂວງໄຊຍະບູລີ ຈຳນວນ 54 ໂຄງການ, ມູນຄ່າ 49,56 ຕື້ກີບ; ໄດ້ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດທີ່ ສພຊ ຮັບຮອງ; ໄດ້ຊຸກຍູ້ ສພຂ ແລະ ອົງການປົກຄອງແຂວງ ແກ້ໄຂຄຳສະເໜີ, ບັນຫາສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳຂອງຜູ້ມີສິດເລືອກຕັ້ງທັງໝົດ 23 ເລື່ອງ ໃນນີ້ແກ້ໄຂແລ້ວ 15 ເລື່ອງ ແລະ ພວມສືບຕໍ່ແກ້ໄຂ 8 ເລື່ອງ; ໄດ້ຊຸກຍູ້ສະພາປະຊາຊົນແຂວງສ້າງນິຕິກຳລຸ່ມກົດໝາຍ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດຂອງຕົນ.

2. ຜົນສຳເລັດທີ່ພົ້ນເດັ່ນຂອງ ສພຂ ແຕ່ກອງປະຊຸມຄັ້ງປະຖົມມະລຶກຮອດປະຈຸບັນ ມີດັ່ງນີ້:

ພາຍຫລັງສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ແຂວງໄຊຍະບູລີ ຄະນະປະຈຳສະພາປະຊາຊົນແຂວງ (ຄປຈ. ສພຂ) ໄດ້ສຸມໃສ່ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມເຂັ້ມແຂງ ໂດຍເນັ້ນໃສ່ຈັດວາງບຸກຄະລາກອນໃນ 10 ຂະແໜງພາຍໃນ ສພຂ ໃຫ້ສອດຄ່ອງກັບຄວາມເປັນຈິງກັບຄວາມຮູ້ຄວາມສາມາດຂອງພະນັກງານ; ໄດ້ສຸມໃສ່ປັບປຸງກົງຈັກຊ່ວຍວຽກຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງພາຍໃນ 11 ເມືອງທົ່ວແຂວງ; ໄດ້ປັບປຸງກົນໄກການປະສານງານລະຫວ່າງ ສພຂ ກັບບັນດາພະແນກການ, ອົງການທີ່ກ່ຽວຂ້ອງຂອງແຂວງ ເປັນຕົ້ນແມ່ນ ສສຂ ກັບແນວລາວສ້າງຊາດ, ບັນດາ 3 ຄະນະກຳມະການ, ຄະນະເລຂາທິການ ຮ່ວມກັບບັນດາພະແນກການ, ກົມກອງຕ່າງໆ ໄດ້ອອກນິຕິກຳຮັບໃຊ້ພາຍໃນ ສພຂ ຈຳນວນ 4 ສະບັບ, ນິຕິກຳທີ່ຮັບໃຊ້ໃຫ້ແກ່ການພົວພັນກັບພະແນກການຕ່າງໆ ຈຳນວນ 27 ສະບັບ; ໄດ້ຊຸກຍູ້ອົງການປົກຄອງແຂວງ ສ້າງນິຕິກຳລຸ່ມກົດໝາຍ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດພາລະບົດບາດຂອງຕົນ ຈຳນວນ 3 ສະບັບ; ໄດ້ຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງກົດໝາຍ ທີ່ ສພຊ ສົ່ງໃຫ້ ຈຳນວນ 17 ສະບັບ; ໄດ້ພິຈາລະນາຮັບຮອງບັນຫາສຳຄັນຂອງທ້ອງຖິ່ນ ເປັນຕົ້ນແມ່ນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ 2021-2025 ແລະ ແຜນປະຈຳປີ 2021-2022 ຂອງແຂວງ ແລະ ອື່ນໆ.

ເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຂ ຊຸດທີ IX ຮອດປັດຈຸບັນ, ສພຂ ມີຜົນສຳເລັດໃນການເຜີຍແຜ່, ຈັດຕັ້ງລັດຖະທຳມະນູນ, ກົດໝາຍ, ມະຕິຂອງ ສພຊ-ສພຂ ແລະ ບັນດານິຕິກຳໃຕ້ກົດໝາຍ ຄື:

ໄດ້ນຳເອົາຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສຊຊ, ສສຂ ຊຸດທີ 2, ກອງປະຊຸມສະໄໝວິສາມັນ ຂອງ ສພຊ ຊຸດ IX ແລະ ສສຂ ຊຸດທີ 2 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສພຊ ຊຸດທີ IX ແລະ ສສຂ ຊຸດທີ 2 ໄປເຜີຍແຜ່ໃຫ້ຜູ້ມີສິດເລືອກຕັ້ງ ຢູ່ບັນດາເມືອງ ພະແນກການຕ່າງໆ ແລະ ບ້ານ, ໄດ້ທັງໝົດ 99 ຈຸດ ກວມເອົາ 122 ບ້ານ ມີຜູ້ເຂົ້າຮ່ວມທັງໝົດ 12.408 ເທື່ອຄົນ ຍິງ 6.217 ເທື່ອຄົນ; ໃນໂອກາດເຄື່ອນໄຫວພົບປະແຕ່ລະຄັ້ງ ສສຊ ແລະ ສພຂ ໄດ້ນຳເອົາວັດຖຸປັດໄຈ ແລະ ເງິນສົດເຊັ່ນ: ຜ້າອັດປາກ, ແຈວລ້າງມື, ເຄື່ອງກິລາ, ອຸປະກອນການຮຽນ ແລະ ວັດສະດຸກໍ່ສ້າງ, ພາຫະນະຮັບໃຊ້ການຂົນສົ່ງຄົນເຈັບ ມອບໃຫ້ເຂດເລືອກຕັ້ງ, ບ້ານ ແລະ ຜູ້ມີສິດເລືອກຕັ້ງ ລວມມູນຄ່າ 512.571.000 ລ້ານກີບ. ນອກນັ້ນ, ຍັງໄດ້ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ 10 ຂອງ ສພຂ ຊຸດທີ I ຢູ່ບັນດາບັນດາເມືອງໃນທົ່ວແຂວງ ແລະ ມະຕິຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ບັນດາພະແນກການ, ກົມກອງ-ອົງການ ຢູ່ອ້ອມຂ້າງແຂວງຕື່ມອີກ.

ການເຄື່ອນໄຫວເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ IX ຮອດປະຈຸບັນ ສພຂ ໄຊຍະບູລີ ພົບຂໍ້ສະດວກ ແລະ ຂໍ້ຄົງຄ້າງຫລາຍຢ່າງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ.

ເຊິ່ງມີຂໍ້ສະດວກ: ຍ້ອນມີແນວທາງມະຕິຄຳສັ່ງຂອງພັກ, ມະຕິຂອງ ສພຊ, ມະຕິ ສພຂ, ລັດຖະທຳມະນູນ, ກົດໝາຍ ເປັນພື້ນຖານໃນການຈັດຕັ້ງປະຕິບັດ; ຍ້ອນມີຄະນະພັກ, ຄະນະນຳພາຂອງຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳພັກແຂວງໃຫ້ການຊີ້ນຳຢ່າງໃກ້ຊິດ ແລະ ໄດ້ຮັບການຮ່ວມມືຈາກອົງການປົກຄອງທ້ອງຖິ່ນຄະນະປະຈຳສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ຊີ້ນຳ-ນຳພາຊຸກຍູ້ ກົງຈັກທີ່ ສພຂ ສ້າງຕັ້ງເຄື່ອນໄຫວຕາມສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍ ສພຂ ແລະ ມະຕິຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ II. ບັນດາຄະນະກຳມະການ ແລະ ສສຂ ໄດ້ຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນ, ກົງຈັກການຈັດຕັ້ງຂອງ ສພຂ ໄດ້ຮັບການປັບປຸງ, ພະນັກງານ-ລັດຖະກອນ ທີ່ເປັນເສນາທິການ ສ່ວນຫລາຍມີຄວາມຮູ້, ຄວາມສາມາດ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ. ລະບອບແບບແຜນວິທີເຮັດວຽກຂອງຄະນະປະຈຳສະພາປະຊາຊົນແຂວງ ໄດ້ຮັບການປັບປຸງດີຂຶ້ນ ເປັນຕົ້ນແມ່ນການກຳນົດແຜນການເຄື່ອນໄຫວ, ມີການສະຫລຸບລາຍງານ, ຖອດຖອນບົດຮຽນເປັນແຕ່ລະໄລຍະ; ມີກົນໄກການປະສານງານ ລະຫວ່າງກົງຈັກພາຍໃນ ສພຂ, ອົງການປົກຄອງແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ເຊິ່ງມີນິຕິກຳເປັນບ່ອນອີງໃນການເຄື່ອນໄຫວ.

ສຳລັບຂໍ້ຫຍຸ້ງຍາກ ແລະ ຄົງຄ້າງການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດມະຕິຂອງ ສພຂ ມາເປັນອັນລະອຽດໃນແຕ່ລະໄລຍະຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ການປະຕິບັດກົນໄກປະສານງານລະຫວ່າງອົງການປົກຄອງແຂວງກັບ ສພຂ ເຖິງວ່າໄດ້ປັບປຸງແລ້ວ ແຕ່ຍັງບໍ່ທັນໄດ້ຮັດກຸມດີເທົ່າທີ່ຄວນ; ການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ການແກ້ໄຂຄຳສະເໜີຕໍ່ປະຊາຊົນຜູ້ມີສິດເລືອກຕັ້ງຂອງພະແນກການ, ອົງການແມ່ນຍັງຊັກຊ້າ ແລະ ບໍ່ທັນແທດເຖິງເປົ້າໝາຍ; ການລົງຕິດຕາມກວດກາປະຕິບັດໂຄງການ, ແຜນພັດທະນາເສດຖະກິດສັງຄົມຍັງຊັກຊ້າ ຍ້ອນມີຄວາມຫຍຸ້ງຍາກທາງດ້ານງົບປະມານ ໃນຊ່ວງການລະບາດຂອງພະຍາດໂຄວິດ-19.

ໃນຕໍ່ໜ້າຫລືວ່າ6ເດືອນທ້າຍປີ ສພຂ ໄຊຍະບູລີ ຈະສູ້ຊົນສຸມໃສ່ຈັດຕັ້ງປະຕິບັດບັນດາເປົ້າໝາຍ.

1. ສຸມໃສ່ກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ 4 ຂອງ ສພຂ ຊຸດທີ II, ເພື່ອພິຈາລະນາເອົາບັນຫາສຳຄັນຂອງທ້ອງຖິ່ນ ພ້ອມທັງລົງພົບປະ ແລະ ເຜີຍແຜ່ຜົນສຳເລັດ ໃຫ້ແກ່ຜູ້ມີສິດເລືອກຕັ້ງ.

2. ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ ບັນດາພະແນກການ-ອົງການ ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ໄດ້ 8 ສະບັບຂຶ້ນໄປ; ສຸມໃສ່ການຈັດຕັ້ງທາບທາມບັນດາຮ່າງກົດໝາຍທີ່ຈະນຳເຂົ້າຄົ້ນຄວ້າ, ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຊ.

3. ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ບັນດາໂຄງການລົງທຶນຂອງລັດ ຢູ່ພາຍໃນແຂວງ ທີ່ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ພິຈາລະນາ ແລະ ຮັບຮອງເອົາ; ສຸມໃສ່ເຄື່ອນໄຫວວຽກງານນຳຄະນະປະຈຳສະພາແຫ່ງຊາດ, ກຳມະທິການ, ສສຊ ທີ່ຈະລົງມາເຄື່ອນໄຫວ ແລະ ເຮັດວຽກຢູ່ແຂວງໄຊຍະບູລີ.

4. ສືບຕໍ່ປັບປຸງກົນໄກປະສານງານລະຫວ່າງ ສພຂ ກັບອົງການປົກຄອງແຂວງໃຫ້ຮັດກຸມ ແລະ ເຄື່ອນໄຫວຕາມພາລະບົດບາດ.

5. ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງ ຄະນະ ສສຊ ປະຈຳເຂດເລືອກຕັ້ງແຂວງ ໃຫ້ໜັກແໜ້ນ, ເຂັ້ມແຂງ ກຳນົດຕຳແໜ່ງງານຈະແຈ້ງ ແລະ ປະກອບພະນັກງານເຂົ້າໃນຕຳແໜ່ງງານ ໃຫ້ຄົບຖ້ວນ.

6. ສືບຕໍ່ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ ແລະ ພະນັກງານ-ລັດຖະກອນ ໂດຍສະເພາະການເຝິກອົບຮົມ, ສຳມະນາໃນຫົວຂໍ້ຕ່າງໆທີ່ກ່ຽວພັນກັບວຽກງານຂອງສະພາ ເພື່ອສາມາດປະຕິບັດພາລະບົດບາດໃນການເປັນຕົວແທນຂອງປະຊາຊົນ.

7. ສືບຕໍ່ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ສາຍດ່ວນ ແລະ ຄຳສະເໜີຕ່າງໆຂອງຜູ້ມີສິດເລືອກຕັ້ງທີ່ຍັງຄ້າງ 8 ເລື່ອງ.

8. ສືບຕໍ່ໃນການເຂົ້າຮ່ວມເຄື່ອນໄຫວບັນດາກິດຈະກຳສະເຫລີມສະຫລອງ 2 ວັນປະຫວັດສາດ; ນອກນັ້ນ, ຍັງຈະໄດ້ຈັດຕັ້ງການຮ່ວມມືການແລກປ່ຽນບົດຮຽນກັບສະພາປະຊາຊົນແຂວງ ເຊີນລາ, ກວາງນິງ, ທາຍບິງ ແລະ ແຂວງອື່ນໆ ຕາມເງື່ອນໄຂຄວາມເປັນຈິງ.

ເພື່ອເຮັດໃຫ້ທິດທາງ ແລະ ແຜນການບາງຈຸດສຸມທ້າຍປີ ໄດ້ຮັບການຈັດຕັ້ງປະຕິບັດ, ຂ້າພະເຈົ້າຮຽກຮ້ອງມາຍັງພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ກໍຄືຜູ້ມີສິດເລືອກຕັ້ງພາຍໃນແຂວງໄຊຍະບູລີ ຈົ່ງຊ່ວຍເຊີດຊູຄວາມເປັນເຈົ້າໃນການເຂົ້າຮ່ວມ ປະຕິບັດສິດພັນທະຂອງພົນລະເມືອງ, ນຳເອົາເນື້ອໃນກອງປະຊຸມຄັ້ງນີ້ໄປຜັນຂະຫຍາຍ.



# ສພຂ ຄຳມ່ວນ ປາຖະກະຖາ 2 ວັນປະຫວັດສາດລາວ-ຫວຽດນາມ



(ສພຊ) ໃນຕອນເຊົ້າຂອງວັນທີ 30 ມິຖຸນາ 2022 ທີ່ຫ້ອງປະຊຸມ ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດພິທີປາຖະກະຖາ 2 ວັນປະຫວັດສາດລາວ-ຫວຽດນາມ ຄື: ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ (5/9/1962-5/9/2022) ແລະ ວັນເຊັນສົນທິສັນຍາມິດຕະພາບການຮ່ວມມື ຄົບຮອບ 45 ປີ (18/7/1977-18/7/2022) ໂດຍການເຂົ້າຮ່ວມປາຖະກະຖາຂອງທ່ານ ບົວພັນ ແສງຈັນ ຮອງປະທານ ສພຂ ຄຳມ່ວນ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ຕະຫລອດຮອດພະນັກງານພາຍໃນ ສພຂ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ທ່ານ ບົວພັນ ແສງຈັນ ໄດ້ຍົກໃຫ້ເຫັນເຖິງມູນເຊື້ອປະຫວັດສາດຂອງການພົວພັນຮ່ວມມື ທີ່ມີມາຍາວນານ ຂອງສອງພັກ ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ພາຍໃຕ້ການນຳພາຂອງຜູ້ນຳສອງປະເທດທີ່ມີຄວາມກ້າຫານ, ສະຫລາດສ່ອງໃສເປັນຈິດໜຶ່ງໃຈດຽວກັນ ພ້ອມກັນຕໍ່ສູ້ເພື່ອປົດປ່ອຍປະເທດຊາດ ຍາດເອົາເອກະລາດຈາກພວກຈັກກະພັດຜູ້ຮຸກຮານ ຈົນສາມາດຍາດໄດ້ໄຊຊະນະ ແລະ ສະຖາປະນາປະເທດຂອງຕົນຂຶ້ນ ການພົວພັນຮ່ວມມືຂອງສອງຊາດລາວ-ຫວຽດນາມ ເປັນຕົວແບບແຫ່ງການພົວພັນທີ່ຍິ່ງໃຫຍ່ ເປັນການພົວພັນທີ່ບໍລິສຸດຜຸດຜ່ອງ ແລະ ຫາຍາກຢູ່ໃນໂລກ ເຊິ່ງຜູ້ນຳພັກ-ລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ກໍໄດ້ຖະນຸຖະໜອມເພີ່ມພູນຄູນສ້າງນ້ຳໃຈສາມັກຄີມິດຕະພາບອັນຍິ່ງໃຫຍ່ ແລະ ການພົວພັນຮ່ວມມືແບບພິເສດຢ່າງສະເໝີຕົ້ນສະເໝີປາຍ.

ການປາຖະກະຖາຄັ້ງນີ້ ກໍເພື່ອເປັນການໂຄສະນາ-ສຶກສາອົບຮົມ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ ເລິກເຊິ່ງໜັກແໜ້ນ ເພື່ອພ້ອມກັນສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງສອງຊາດລາວ-ຫວຽດນາມ ໃຫ້ໝັ້ນຄົງຂະໜົງແກ່ນ ເປັນສິ່ງທີ່ສຳຄັນທີ່ສຸດທີ່ພັກ-ລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ຈະໄດ້ສືບຕໍ່ໃນການພົວພັນຮ່ວມມື ແລກປ່ຽນບົດຮຽນນຳກັນຢ່າງຮອບດ້ານ, ສ້າງຄວາມເຊື່ອໝັ້ນເຊິ່ງກັນ ແລະ ກັນ ພ້ອມກັນປົກປັກຮັກສາ ແລະ ສ້າງສາປະເທດຊາດຕາມເສັ້ນທາງສັງຄົມນິຍົມ.

ໂອກາດດຽວກັນນີ້, ທ່ານ ບົວພັນ ແສງຈັນ ໄດ້ໂອ້ລົມຕໍ່ທີ່ປະຊຸມ ເພື່ອເປັນການໂຄສະນາສຶກສາອົບຮົມໃຫ້ສະມາຊິກພັກ-ພະນັກງານ, ທະຫານ, ຕຳຫລວດ ແລະ ປະຊາຊົນຊັ້ນຄົນຕ່າງໆຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງຕື່ມກ່ຽວກັບປະຫວັດສາດ ເປັນການປຸກລະດົມກຳລັງໃຈໃຫ້ແກ່ຄະນະພັກ, ອຳນາດການປົກຄອງຂັ້ນຕ່າງໆ ຕະຫລອດຮອດປະຊາຊົນບັນດາເຜົ່າ ເຊີດຊູນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນຂອງຕົນສູງຂຶ້ນ, ຕື່ນຕົວປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

(ເອື້ອ ມະໂນສິງ)

# 108 ສາລະ

# ບຸນເຂົ້າພັນສາ

ຮຽບຮຽງໂດຍ: ທິດຕາ




ບຸນເຂົ້າພັນສາ ຫລື ວັນເຂົ້າພັນສາ ກົງກັບມື້ແຮມ 1 ຄ່ຳເດືອນ 8 ເປັນວັນສຳຄັນທາງພຸດທະສາສນາ ນັ້ນຄື ວັນເຂົ້າພັນສາ ເຊິ່ງເປັນວັນທີ່ພຣະສົງເຖຣາວາດຈະພັກປະຈຳຢູ່ທີ່ໃດທີ່ໜຶ່ງຕະຫລອດໄລຍະເວລາລະດູຝົນ ທີ່ມີກຳນົດເວລາເປັນ 3 ເດືອນ (ໜຶ່ງໄຕຣມາດ) ຕາມທີ່ພຣະທຳວິໄນບັນຍັດໄວ້ ໂດຍບໍ່ໄປຄ້າງແຮມຢູ່ບ່ອນອື່ນ ຫລື ທີ່ຮຽກກັນຕິດປາກວ່າ “ຈຳພັນສາ” ນັ້ນເອງ; “ເຂົ້າພັນສາ” ແປວ່າ ພັກຝົນ ໝາຍເຖິງພຣະສົງສາມະເນນຕ້ອງຢູ່ປະຈຳໃນວັດໃດວັດໜຶ່ງໃນລະດູຝົນ ຄືເລີ່ມຕັ້ງແຕ່ແຮມ 1 ຄ່ຳເດືອນ 8 ຂອງທຸກປີຮຽກວ່າ ”ບຸຣິມພັນສາ” ຖ້າປີໃດມີ 8 ສອງຄັ້ງ (8 ສອງຫົນ) ກໍເລື່ອນມາເປັນວັນແຮມ 1 ຄ່ຳເດືອນແປດຫລັງ ແລະ ອອກພັນສາ ໃນມື້ຂຶ້ນ 15 ຄ່ຳເດືອນ 11 ຮຽກວ່າ “ປັດສິມພັນສາ” ເວັ້ນແຕ່ມີກິດທຸລະຈຳເປັນ ຄື: ເມື່ອເດີນທາງໄປທີ່ໃດໜຶ່ງແລ້ວບໍ່ສາມາດເດີນທາງກັບຄືນໄດ້ໃນມື້ນັ້ນ ກໍຊົງອະນຸຍາດໃຫ້ໄປແຮມຄືນ (ຄ້າງຄືນ) ໄດ້ ຄັ້ງໜຶ່ງບໍ່ໃຫ້ກາຍ 7 ຄືນ ຫາກເກີນກຳນົດ ຖືວ່າບໍ່ໄດ້ຮັບຜົນປະໂຫຍດແຫ່ງການຈຳພັນສາ ຫລື ເອີ້ນວ່າ: ພັນສາຂາດ.

ສຳລັບຂໍ້ຍົກເວັ້ນໃຫ້ພິກຂຸຈຳພັນສາບ່ອນອື່ນ ໂດຍບໍ່ຖືວ່າເປັນການຂາດພັນສາ ເວັ້ນແຕ່ເກີນ 7 ວັນ ໄດ້ແກ່:

1. ການໄປຮັກສາພະຍາບານພິກຂຸ ຫລື ບິດາມານດາທີ່ເຈັບປ່ວຍ;

2. ການໄປລະງັບພິກຂຸສາມະເນນທີ່ຢາກສິກບໍ່ໃຫ້ສິກໄດ້;

3. ການໄປເພື່ອກິດທຸລະຂອງຄະນະສົງ ເຊັ່ນ: ການໄປຫາອຸປະກອນມາສ້ອມກຸດຕິທີ່ຊຳຫລຸດເປ່ເພ;

4. ຫາກອອກຕົນຍາດໂຍມນິມົນໄປທຳບຸນ ກໍໄປສະຫລອງສັດທາໃນການບຳເພັນກຸສົນຂອງເຂົາໄດ້;

ນອກຈາກນີ້, ຫາກລະຫວ່າງການເດີນທາງກົງກັບວັນຍຸດເຂົ້າພັນສາພໍດີ ພຣະພິກຂຸສົງເຂົ້າມາທັນໃນໝູ່ບ້ານ ຫລື ໃນເມືອງ ກໍພໍຈະຫາທີ່ພັກອາໄສໄດ້ຕາມສົມຄວນ ແຕ່ຖ້າມາບໍ່ທັນກໍຕ້ອງອາໄສເຫງົ້າໄມ້ໃຫຍ່ເປັນທີ່ພັກແຮມ ຊາວບ້ານເຫັນພຣະໄດ້ຮັບຄວາມລຳບາກເຊັ່ນນີ້ ຈຶ່ງຊ່ວຍກັນປຸກຕູບ ເພື່ອໃຫ້ທ່ານໄດ້ອາໄສພັກຝົນຮ່ວມກັນຫລາຍໆອົງ ທີ່ພັກດັ່ງກ່າວນີ້ຮຽກວ່າ ”ວິຫານ” ແປວ່າ ທີ່ຢູ່ຂອງສົງ.

ໂດຍປົກກະຕິ ເຄື່ອງໃຊ້ສອຍຂອງພຣະ ຕາມພຸດທານຸຍາດໃຫ້ມີປະຈຳຕົວນັ້ນ ມີພຽງອັດຖະບໍລິຂານ ອັນໄດ້ແກ່ຜ້າສະບົງ, ຈີວອນ (ຜ້າຄຸມ), ສັງຄາຕິ (ຜ້າສັງຄາ), ເຂັມ, ບາດສາຍປະຄົດ (ສາຍຮັດມັດແອວ), ໝໍ້ຕອງນ້ຳ ແລະ ມີດໂກນ ແລະ ຜ້າອ້າບນ້ຳຝົນ ສຳລັບໃຫ້ທ່ານຜັດປ່ຽນ ແລະ ຂອງຈຳເປັນໃນກິດປະຈຳວັນຂອງທ່ານ; ຢ່າງໃດກໍຕາມ ເຖິງແມ່ນວ່າການເຂົ້າພັນສາ ເປັນເລື່ອງຂອງພຣະພິກຂຸ ແຕ່ພຸດທະສາສະນິກະຊົນ ກໍຖືເປັນໂອກາດດີທີ່ຈະໄດ້ທຳບຸນຮັກສາສິນ ແລະ ຊຳລະຈິດໃຈໃຫ້ຜ່ອງໃສ ກ່ອນວັນເຂົ້າພັນສາຊາວບ້ານກໍຈະໄປຊ່ວຍພຣະທຳຄວາມສະອາດເສນາຊະນະ, ສ້ອມແຊມກຸດຕິວິຫານ ແລະ ອື່ນໆ ພໍເຖິງວັນເຂົ້າພັນສາກໍຈະໄປຮ່ວມທຳບຸນຕັກບາດຖວາຍເຄື່ອງສັກກາລະບູຊາ ດອກໄມ້ທູບທຽນ ແລະ ເຄື່ອງໃຊ້ ເຊັ່ນ: ສະບູ, ຢາຖູແຂ້ວ..... ພ້ອມຟັງເທດຟັງທຳ ແລະ ຮັກສາອຸໂປສົດສິນຮ່ວມກັນຢູ່ວັດ ບາງຄົນອາດຕັ້ງໃຈງົດເວັ້ນອະບາຍຍະມຸກຕ່າງໆ ເປັນກໍລະນີພິເສດ ເຊັ່ນ: ງົດເສບສຸລາ, ງົດຂ້າສັດເປັນຕົ້ນ ອີກອັນໜຶ່ງບິດາມານດາມັກຈະອຸປະສົມບົດ (ບວດ) ໃຫ້ລູກຫລານຂອງຕົນ ໂດຍຖືກັນວ່າການເຂົ້າບວດຮຽນ ແລະ ຈຳພັນສາໃນລະຫວ່າງນີ້ຈະໄດ້ຮັບອານິສົງຢ່າງສູງ; ນອກຈາກນີ້, ຍັງມີປະເພນີໜຶ່ງທີ່ຂາດບໍ່ໄດ້ ຄື ປະເພນີການຫລໍ່ທຽນເຂົ້າພັນສາເຊິ່ງເປັນປະເພນີທີ່ສືບທອດມາແຕ່ບູຮານນະການ ໃນໄລຍະເຂົ້າພັນສາ ພຣະພິກຂຸຈະຕ້ອງມີການໄຫວ້ພຣະສູດມົນທຸກເຊົ້າ-ແລງ ແລະ ຈະຕ້ອງມີທູບທຽນບູຊາ ພ້ອມພຸດທະສາສະນິກະຊົນ ຈຶ່ງພ້ອມໃຈກັນຫລໍ່ທຽນເຂົ້າພັນສາ ສຳລັບໃຫ້ພຣະພິກຂຸຈູດບູຊາເປັນການກຸສົນລະທານຢ່າງໜຶ່ງ ເພາະເຊື່ອກັນວ່າ ໃນການໃຫ້ທານດ້ວຍແສງສະຫວ່າງ ຈະມີອານິສົງເພີ່ມພູນປັນຍາຫູຕາສະຫວ່າງສະໄຫວ; ບາງທ້ອງຖິ່ນການຫລໍ່ທຽນເຂົ້າພັນສາໄດ້ເຮັດຢ່າງເປັນຂະບວນຟົດຟື້ນມ່ວນຊື່ນ ເມື່ອຫລໍ່ສຳເລັດແລ້ວ ກໍຈະມີການແຫ່ແຫນອ້ອມຮອບສິມ (ອຸໂປສົດ) 3 ຮອບ ແລ້ວນຳໄປບູຊາພຣະຕະຫລອດໄລຍະ 3 ເດືອນ ບາງແຫ່ງກໍມີການປະກວດການຕົບແຕ່ງ ແລະ ແຫ່ຮອບເມືອງດ້ວຍຂະບວນທີ່ສວຍງາມ ໂດຍຖືວ່າເປັນງານປະຈຳປີທີ່ຍິ່ງໃຫຍ່.

ກິດຈະກຳທີ່ປະຕິບັດໃນມື້ເຂົ້າພັນສາມີ ຄື: ຮ່ວມກັນເຮັດທຽນເຂົ້າພັນສາ, ຖວາຍຜ້າອ້າບນ້ຳຝົນ ແລະ ຈະຕຸປັດໄຈແກ່ພຣະສົງສາມະເນນ, ທຳບຸນຕັກບາດ ຟັງພຣະທຳມະເທດສະໜາ ແລະ ຮັກສາອຸໂປສົດສິນ-ອະທິຖານ ຍົກເວັ້ນອະບາຍຍະມຸກຕ່າງໆ ສຳລັບຜູ້ໃຫ້ທານ ຮັກສາສິນໃນເທສະການເຂົ້າພັນສາຈະໄດ້ຜາລະອານິສົງຫລາຍ ຍ້ອນວ່າພຣະພິກຂຸຈຳວັດປະຕິບັດທຳ ຜູ້ໃດໄດ້ອຸປະຖາກຮັກສາຈະປະສົບຜົນສຳເລັດ, ຈະເປັນຜູ້ຈະເລີນໃນທາງທຳ ສະນັ້ນ, ຈຶ່ງເອົາຕົນເຂົ້າວັດປະຕິບັດ ເພື່ອຊຸດເກົາຈິດໃຈໃຫ້ເປັນຜູ້ຮູ້ໃຫ້ອະໄພ, ບໍ່ຈອງເວນຈອງກຳກັນ ໃຫ້ຮູ້ເທົ່າທັນບັນຫາ ອາໄສຫລັກທຳເປັນແສງສະຫວ່າງ ເບື້ອງທາງໃນການດຳເນີນຊີວິດ ເພື່ອຄວາມຜາສຸກຮົ່ມເຢັນ.

# ສາລາກະວີ

## ເຂົ້າພັນສາລາເມົາ

\# ໂດຍ: ຊຽງເອງ

✻ ຫລາຍຄົນຂັນແຂ່ງເວົ້າ
ໃນພັນສາ
ເອົາຕົນເຂົ້າ
ຫລຸກລະເລີກເກືອກກົ້ວ
ຈາປ່າວຂານໄຂ
ເລີກລາຢາເຫລົ້າ
ຖືສິນເຄັ່ງຄັດ
ຢາເຫລົ້າສິ່ງມຶນເມົາ

✻ ປີນີ້ນັດບອກໄວ້
ໄພຍາຄວັນ
ເໝືອນອະສູນຮ້າຍ
ຮອງຮັບທາດພິດຮ້າຍ
ລາເລີກເມົາ
ພິດອາຍອົມເປື້ອນ
ທຳລາຍຕັບປອດ
ໝາຍມ້ຽນມອດຊີວັງ

✻ ຈິງຈັງຮັດແນ່ແທ້
ເດັດດ່ຽວໃຈເປັນກົກ
ອ່ອນແອໂອນເອນເລື້ອຍ
ຍຸດເຊົາພໍສ່ຳນັ້ນ
ສົມດັ່ງໝາຍປອງ ອິຫລິເດີ!
ບໍ່ອ່ຽງເອນຂວາຊ້າຍ
ຄວາມຫວັງຈະສູນເປົ່າ
ຊີນຳວຸ້ນຕໍ່ໄປ

✻ ເຮັດບໍ່ໄດ້ດັ່ງຂໍ້
ຈະສູນເສຍລາສີ
ມີແຕ່ໃຈປອງປ້ຳ
ຜັດວັນແທນເລື່ອນເລື້ອຍ
ຂານຂອດປະຕິຍານ ມານັ້ນ!
ຄ່າຄາມຄູນຄ້ຳ
ກະທຳການແຂງແກ່ນ
ຄືຄວາມຄ້າງຂອດຕັນ

✻ ມັນຈຶ່ງເປັນເລື່ອງເວົ້າ
ໃຈບໍ່ແຂງຂຶງຂັງ
ຄອງເກົ່າແຊງມາຊ້ອນ
ປີນີ້ ປີໜ້າເຮັດບໍ່ໄດ້
ແຈ້ງຂ່າວຂານໄຂ
ສິ່ງພະລັງປົກປ້ອງ
ຊູແຮງປະກອບສ່ວນ
ງານນີ້ເລີ່ມທີ່ໃຈ ທ່ານເອີຍ!



# ສຸກສະບາຍຫາຍໂຣກ

# ພະຍາດທີ່ມັກເກີດນຳພະນັກງານຫ້ອງການ

ແປ ແລະ ຮຽບຮຽງໂດຍ: ຫອມສະນິດ

**1. ມືຊາ**

ມືຊາ ເປັນການອັກເສບຂອງເອັນຫຸ້ມຂໍ້ມື, ເສັ້ນເອັນນິ້ວມື ເຊິ່ງປັດຈຸບັນພະຍາດນີ້ມັກພົບຫລາຍ ເນື່ອງຈາກວ່າເທັກໂນໂລຊີເຂົ້າມາມີສ່ວນໃນຊີວິດປະຈຳວັນ ເຊັ່ນ: ການນຳໃຊ້ເຄື່ອງຄອມພິວເຕີ, ການຈັບເມົາໃນທ່າເດີມໆ ແລະ ເປັນເວລາດົນ ເຊິ່ງເຮັດໃຫ້ກ້າມເນື້ອກົດທັບເສັ້ນປະສາດ ແລະ ເສັ້ນເອັນຈົນອັກເສບ ເຊິ່ງເຮັດໃຫ້ເກີດອາກາດປວດຂອງປາຍປະສາດນິ້ວມື.

**2. ພະຍາດຕໍ້ຫີນ ແລະ ຕາມົວ**

ໂຣກນີ້ ມັກເກີດຂຶ້ນກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ ເຊິ່ງມີຄວາມສ່ຽງຫລາຍໃນການເປັນພະຍາດຕໍ້ຫີນ ຫລື ກຳລັງເປັນໂຣກນີ້ໂດຍບໍ່ຮູ້ຕົວ; ຜູ້ທີ່ເປັນໂລກນີ້ ຖ້າບໍ່ໄດ້ຮັບການປິ່ນປົວຢ່າງຖືກວິທີ ອາດເຮັດໃຫ້ຕາບອດໄດ້; ສາເຫດຕົ້ນຕໍຂອງໂຣກນີ້ ເກີດຈາກການໃຊ້ສາຍຕາເປັນເວລາດົນໆ, ການອັກເສບ ຫລື ຕິດເຊື້ອຂອງແກ້ວຕາ ຈາກການໃຊ້ຄອນແທກເລນ ດັ່ງນັ້ນ, ແຕ່ລະຄົນຄວນກວດສຸຂະພາບຕາທຸກໆ 2 ປີ ເພື່ອປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງໃນການເກີດໂຣກຕໍ້ຫີນ.

**3. ໜື້ວໃນຖົງນ້ຳບີ**

ໜື້ວໃນຖົງນ້ຳບີ ເກີດຈາກການກິນອາຫານທີ່ມີໄຂມັນຫລາຍເປັນປະຈຳ ເຊິ່ງມັກພົບໃນເພດຍິງທີ່ມີອາຍຸ 40 ປີຂຶ້ນໄປ ແລະ ຄົນຕຸ້ຍ ນອກຈາກນີ້, ຍັງມີປັດໄຈອື່ນໆອີກ ເຊັ່ນ: ກຳມະພັນ, ການອັກເສບຂອງຖົງນ້ຳບີ ແລະ ການກິນຢາຄຸມກຳເນີດເປັນເວລາດົນ; ເມື່ອເປັນໜື້ວແລ້ວ ຖ້າບໍ່ຟ້າວປິ່ນປົວອາດຈະກໍໃຫ້ເກີດອາການຊຳເຮື້ອຕາມມາອີກດ້ວຍ.

**4. ພົກຍ່ຽວອັກເສບ**

ມັກເກີດກັບຜູ້ທີ່ນັ່ງເຮັດວຽກເປັນເວລາດົນໆ ຫລື ບຸກຄົນທີ່ມັກເດີນທາງໄກຕ້ອງອົດຖ່າຍເບົາເປັນປະຈຳ ອັນເປັນສາເຫດພາໃຫ້ພົກຍ່ຽວອັກເສບ ເຊິ່ງເກີດຈາກເຊື້ອແບກທີເຣຍເຂົ້າໄປຕາມທໍ່ຍ່ຽວແລ້ວກໍ່ໃຫ້ເກີດການອັກເສບ ມັກເກີດນຳເພດຍິງຫລາຍກວ່າເພດຊາຍ.

**5. ອາການເຄັ່ງຄຽດ ແລະ ນອນບໍ່ຫລັບ**

ມັກເກີດຂຶ້ນກັບຄົນທີ່ເຮັດວຽກ ບໍ່ວ່າຄົນທີ່ເລີ່ມເຮັດວຽກໃໝ່ໆ ຫລື ຄົນທີ່ເຮັດວຽກມາເປັນສິບໆປີ ບາງຄົນອາດຈະບໍ່ຮູ້ຕົວເລີຍວ່າຕົນເອງກຳລັງປະເຊີນກັບອາການຕຶງຄຽດ ທີ່ກຳລັງເກີດຂຶ້ນກັບຕົນເອງ ວິທີການຫລີກລ່ຽງອາການຕຶງຄຽດທີ່ງ່າຍທີ່ສຸດ ຄື ຮູ້ຈັກຜ່ອນຄາຍກັບໜ້າທີ່ ແລະ ປະວຽກຂອງຕົນເອງ ອອກໄປຍ່າງຈັກ 10 ນາທີ ເຊິ່ງເປັນການຜ່ອນຄາຍອີກວິທີໜຶ່ງ.

**6. ຄວາມດັນເລືອດສູງ**

ເປັນໄພງຽບທີ່ບໍ່ສະແດງອາການ ແລະ ມັກພົບກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ ອັນເກີດຈາກປັດໄຈຫລາຍຢ່າງເຊັ່ນ: ໂລກອ້ວນ, ຄວາມຕຶງຄຽດ, ຮັບປະທານອາຫານທີ່ມີລົດເຄັມ, ສູບຢາ, ດື່ມເຫລົ້າ ຫລື ຜູ້ທີ່ເຮັດວຽກຢູ່ກັບໂຕະເປັນປະຈຳ ຈະມີຄວາມສ່ຽງຫລາຍກວ່າຜູ້ທີ່ເຮັດວຽກໃຊ້ກຳລັງ; ຄວາມດັນເລືອດສູງບໍ່ພຽງແຕ່ເລື່ອງຄວາມດັນ ແຕ່ຍັງອາດນຳໄປສູ່ໂລກເສັ້ນເລືອດໃນສະໝອງແຕກ, ອຳມະພຶດ, ອຳມະພາດ, ໝາກໄຂຫລັງ, ພິການ ແລະ ຫົວໃຈວາຍອີກດ້ວຍ.

**7. ໂລກອ້ວນ**

ຈາກການວິໄຈທາງການແພດຫລ້າສຸດພົບວ່າ ໂລກອ້ວນມັກເກີດກັບຄົນໄວເຮັດວຽກ ເຊິ່ງເປັນບໍ່ເກີດຂອງໂລກອື່ນໆອີກເຊັ່ນ: ໂລກເບົາຫວານ, ໂລກຫົວໃຈ, ໄຂມັນໃນຫລອດເລືອດຫລາຍ ແລະ ຄວາມດັນເລືອດສູງ; ຜູ້ທີ່ເປັນໂລກອ້ວນ ຄວນເອົາໃຈໃສ່ເລື່ອງອາຫານການກິນເປັນພິເສດ ຄວນປຶກສາເລື່ອງໂພສະນາການ ແລະ ຫາເວລາອອກກຳລັງກາຍຢ່າງສະໝ່ຳສະເໝີ.

**8. ໂລກກະເພາະ**

ມັກເກີດກັບຄົນທີ່ກິນອາຫານບໍ່ເປັນເວລາ, ຄົນທີ່ບໍ່ມີເວລາ, ຟ້າວຟັ່ງຈົນຫຍໍ້າອາຫານບໍ່ແຫລກ ຄົນທີ່ມີອາການເຄັ່ງຕຶງຮຸນແຮງ ຈົນອາຫານບໍ່ຍ່ອຍ, ຄົນທີ່ສູບຢາ ແລະ ດື່ມເຫລົ້າຫລາຍ ມັກສ່ຽງກັບການເປັນໂລກກະເພາະ ແລະ ອາດນຳໄປສູ່ການເກີດມະເຮັງກະເພາະອາຫານ.

**9. ປວດຫລັງ**

ການໃຊ້ຊີວິດຢູ່ໜ້າຈໍຄອມພິວເຕີມື້ລະ 8 ຊົ່ວໂມງ ຫລື ຫລາຍກວ່ານັ້ນ ລວມທັງໃສ່ເກີບສົ້ນສູງເລື້ອຍໆ ອາດເປັນສາເຫດສຳຄັນຂອງອາການປວດຄໍ, ບ່າໄຫລ່, ຫລັງ, ແຂນ-ຂາ ແລະ ສະໂພກ ອັນເນື່ອງມາຈາກໂລກກ່ຽວກັບກະດູກສັນຫລັງ ຜູ້ທີ່ມີອາການປວດດັ່ງກ່າວ ຄວນໄປພົບແພດ ຫລື ຜູ້ຊ່ຽວຊານສະເພາະ ເພື່ອວິເຄາະອາການປວດ ແລະ ຮັກສາໃຫ້ຖືກຕ້ອງ.

**10. ເຈັບຫົວ (ໄມເກຣນ)**

ເປັນໂລກຊະນິດໜຶ່ງທີ່ມີຄົນປ່ວຍເປັນຈຳນວນຫລາຍ ຜູ້ປ່ວຍຈະຮູ້ສຶກວ່າເມື່ອນັ່ງເຮັດວຽກທີ່ເຄັ່ງຄຽດຈະຮູ້ສຶກປວດບໍລິເວນຂະມັບດ້ານໜ້າຫົວ ຫລື ດ້ານຫລັງຕົ້ນຄໍ. ອາການປວດດັ່ງກ່າວ ຄືສັນຍານເຕືອນໃຫ້ຜູ້ປ່ວຍຮູ້ເຖິງສະພາບສ່ຽງຕໍ່ການເປັນໂຣກໄມເກຣນ ການພັກຜ່ອນບໍ່ພຽງພໍ, ແສງແດດກ້າ, ຄວາມຮ້ອນ ແລະ ອາການຂາດຮໍໂມນບາງຊະນິດ ກໍເປັນປັດໄຈກໍ່ໃຫ້ເກີດອາການປວດຫົວໄມເກຣນໄດ້ຄືກັນ.

ໃນວົງການແພດ ມັກກວດພົບໂລກ 10 ຊະນິດ ທີ່ມັກຄຸກຄາມຊີວິດຄົນໄວເຮັດວຽກ ເຖິງເວລາແລ້ວທີ່ພວກເຮົາຄວນໃຫ້ເວລາກັບຕົນເອງ ແລະ ກັບມາສຳຫລວດຄວາມຜິດປົກກະຕິຂອງຮ່າງກາຍ ເພື່ອຈະໄດ້ຮູ້ວ່າຮ່າງກາຍກຳລັງສົ່ງສັນຍານເຕືອນອັນໃດແດ່ ກ່ອນທີ່ທຸກຢ່າງຈະຊ້າເກີນກວ່າຈະແກ້ໄຂ.

ຕໍ່ຈາກໜ້າ 3...

ຕິບັດບັນດາວຽກງານຄື: ດ້ານນິຕິບັນຍັດ: ສືບຕໍ່ເປັນເຈົ້າການເຂົ້າຮ່ວມການສ້າງ ແລະ ປັບປຸງຮ່າງກົດໝາຍຈຳນວນ 4 ສະບັບຄື: 1. ກົດໝາຍວ່າດ້ວຍຫໍພິພິທະພັນ (ສ້າງໃໝ່), 2. ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ), 3. ກົດໝາຍວ່າດ້ວຍວຽກງານສາທາລະນະສຸກ (ສ້າງໃໝ່), 4. ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປັບປຸງ) ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ມີປະສິດທິຜົນ ແລະ ສືບຕໍ່ເຂົ້າຮ່ວມການປັບປຸງຮ່າງກົດໝາຍວ່າດ້ວຍວິຈິດສິນຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX; ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຮ່ວມກັບບັນດາຂະແໜງການໃນຂົງເຂດວັດທະນະທຳ-ສັງຄົມ; ຄົ້ນຄວ້າປະກອບຄຳເຫັນຕໍ່ສົນທິສັນຍາ, ສັນຍາສາກົນທີ່ ສປປລາວ ເປັນພາຄີໃນຂົງເຂດວັດທະນະທຳ-ສັງຄົມຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ; ດ້ານການຕົກລົງບັນຫາສຳຄັນຂອງຊາດ: ຄົ້ນຄວ້າບັນດາເນື້ອໃນຂົງເຂດວັດທະນະທຳ-ສັງຄົມ ທີ່ຈະນຳເຂົ້າຜ່ານກອງປະຊຸມຄະນະປະຈຳ ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ໂດຍເນັ້ນໃສ່ຄຸນນະພາບເປັນບັນຫາສຳຄັນ; ລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX; ດ້ານການຕິດຕາມກວດກາ: ດຳເນີນການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດສະບັບເລກທີ 23/ສພຊ, ລົງວັນທີ 18 ພະຈິກ 2019 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບຜົນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະບັນດາຄາດໝາຍທີ່ບໍ່ທັນບັນລຸໃນຂະແໜງການສຶກສາທິການ ແລະ ກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ ແລະ ຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຕາມຂະແໜງການບູລິມະສິດຕາມສາຍຕັ້ງຂອງຂະແໜງສຶກສາທິການ ແລະ ກິລາ, ສາທາລະນະສຸກ; ການປະຕິບັດນະໂຍບາຍຕໍ່ພະນັກງານປະຕິວັດອາວຸໂສທີ່ມີຄຸນງາມຄວາມດີຕໍ່ການປະຕິວັດຊາດປະຊາທິປະໄຕ; ເຂົ້າຮ່ວມຕິດຕາມກວດກາໂຄງການລົງທຶນທີ່ມີຜົນກະທົບຕໍ່ສັງຄົມໃນຂົງເຂດວັດທະນະທຳ-ສັງຄົມຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ; ປະສານສົມທົບ ແລະ ເຂົ້າຮ່ວມກັບບັນດາກຳມາທິການ, ຂະແໜງການທີ່ກ່ຽວຂ້ອງ, ຄະນະຕິດຕາມຄະນະສະເພາະກິດຂອງຄະນະປະຈຳສະພາແຫ່ງຊາດເພື່ອລົງຕິດຕາມກວດກາ ແລະ ຊຸກຍູ້ມາດຕະການຟື້ນຟູ ແລະ ແກ້ໄຂຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ແລະ ບັນຫາພົ້ນເດັ່ນເຄັ່ງຮ້ອນ ກໍຄືທາງສຽງຂອງສັງຄົມ ແລະ ຄຳສະເໜີຂອງປະຊາຊົນໃນຂົງເຂດວັດທະນະທຳ-ສັງຄົມ; ສືບຕໍ່ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຈຳນວນ 11 ສະບັບ ແລະ ບັນຫາຂອງປະຊາຊົນສະເໜີຜ່ານສາຍດ່ວນຂອງສະພາແຫ່ງຊາດໃຫ້ສຳເລັດ; ສ່ວນການສ້າງຄວາມເຂັ້ມແຂງ: ຈັດກອງປະຊຸມຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ, ພະນັກງານ-ລັດຖະກອນຂອງກຳມາທິການໃນຫົວຂໍ້ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຳມາທິການ; ຍົກສູງຂີດຄວາມສາມາດຂອງພະນັກງານ-ລັດຖະກອນໃນການສ້າງ ແລະ ປັບປຸງກົດໝາຍ, ການໃຫ້ຄຳປຶກສາ ແລະ ຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ເຂົ້າຮ່ວມກອງປະຊຸມເຝິກອົບຮົມລະດັບວິຊາການກ່ຽວກັບທັກສະການຄົ້ນຄວ້າ, ການຮ່າງມະຕິກອງປະຊຸມສາກົນ ເປັນຕົ້ນ ກອງປະຊຸມ AIPA, AIPACODD; ສືບຕໍ່ຊຸກຍູ້ ແລະ ສົ່ງເສີມພະນັກງານ-ລັດຖະກອນພາຍໃນກຳມາທິການໄປຍົກລະດັບທິດສະດີການເມືອງ, ວິຊາສະເພາະ, ພາສາຕ່າງປະເທດ, ໄອທີ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມເງື່ອນໄຂຕົວຈິງ; ເອົາໃຈໃສ່ປັບປຸງຂອດການປະສານງານກັບບັນດາກຳມາທິການຂອງສະພາແຫ່ງຊາດ, ກັບບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການ ແລະ ບັນດາຂະແໜງການໃນຂົງເຂດວັດ ທະນະທຳ-ສັງຄົມຂັ້ນສູນກາງໃຫ້ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ ສຳລັບດ້ານການເຄື່ອນໄຫວວຽກງານຕ່າງປະເທດ ແມ່ນສືບຕໍ່ເຂົ້າຮ່ວມ ແລະ ເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ, ເພີ່ມທະວີການພົວພັນຮ່ວມມືກັບປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຕາມແນວທາງການຕ່າງປະເທດຂອງພັກກຳຄືທິດທາງລວມຂອງສະພາແຫ່ງຊາດ; ປະສານສົມທົບກັບກຳມາທິການການຕ່າງປະເທດເພື່ອສ້າງບົດບັນທຶກຄວາມເຂົ້າ ໃຈລະຫວ່າງກຳມາທິການວັດທະນະທຳ-ສັງຄົມກັບກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ສສ ຫວຽດນາມ; ສືບຕໍ່ປະສານສົມທົບກັບອົງການ UNFPA, UNICEF ໃນການຈັດຕັ້ງປະຕິບັດໂຄງການຮ່ວມມືລະຫວ່າງກຳມາທິການວັດທະນະທຳ-ສັງຄົມກັບອົງການດັ່ງກ່າວເພື່ອຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ພະນັກງານເສນາທິການຂອງກຳມາທິການວັດທະນະທຳ-ສັງຄົມ; ເຂົ້າຮ່ວມການເຄື່ອນໄຫວຂອງບັນດາຄະນະມິດຕະພາບລັດຖະສະພາລາວ ກັບລັດຖະສະພາບັນດາປະເທດໃນພາກພື້ນ ແລະ ໃນໂລກ ດ້ວຍຄວາມເປັນເຈົ້າການ; ສືບຕໍ່ພົວພັນ, ຍາດແຍ່ງເອົາການຮ່ວມມືຊ່ວຍເຫລືອດ້ານວິຊາການ ແລະ ທຶນຮອນຈາກປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ຕາມການອະນຸມັດຂອງຂັ້ນເທິງ.

ຊີວິດ...

ວັນທີ 13 ກໍລະກົດ 1909 ກົງກັບມື້ແຮມ 15 ຄ່ຳ, ວັນອັງຄານ ເດືອນ 8 ປີລະກາ ທີ່ຫລວງພະບາງ ໃນຄອບຄົວເຊື້ອເຈົ້າຣາຊະວົງ ເປັນໂອ ຣົດຂອງເຈົ້າມະຫາອຸປະຣາດ ບຸນຄົງ ແລະ ໝ່ອມ ຄຳອ້ວນ ມີເອື້ອຍ 2 ຄົນຄື: ເຈົ້າຍິງ ທະວີວັນ ແລະ ເຈົ້າຍິງ ຈິນດາຣັດສະໝີ; ມີອ້າຍຕ່າງມານດາ 2 ຄົນ ເຊິ່ງເປັນຜູ້ມີບົດບາດສຳຄັນທາງປະຫວັດສາດ ຄື: ເຈົ້າເພັດຊະຣາດ ແລະ ເຈົ້າສຸວັນນະພູມມາ.

ຊີວິດໃນໄວເຍົາຂອງທ່ານໄດ້ຮັບການອົບຮົມສັ່ງສອນເປັນຢ່າງດີ; ເພິ່ນເປັນເດັກໃນວັງທີ່ມັກໄປຫລິ້ນກັບເດັກນ້ອຍທົ່ວໄປ ໂດຍບໍ່ຖືຊົນຊັ້ນວັນນະຂອງຕົນ ເຊິ່ງໄດ້ເຮັດໃຫ້ເພິ່ນໄດ້ສຳຜັດກັບຊີວິດປະຈຳວັນຂອງປະຊາຊົນ ແລະ ເກີດຄວາມເມດຕາຮັກໄຄ່ປະຊາຊົນຕັ້ງແຕ່ຍັງນ້ອຍ. ເມື່ອອາຍຸໄດ້ 7 ປີ, ເພິ່ນໄດ້ເຂົ້າສຶກສາຢູ່ໂຮງຮຽນປະຖົມສຶກສາທີ່ຫລວງພະບາງ. ປະທານເອງເປັນນັກຮຽນທີ່ດຸໝັ່ນ ແລະ ມີພອນສະຫວັນຫລາຍດ້ານ, ຮຽນເກັ່ງ ແລະ ສອບເສັງໄດ້ຄະແນນດີເລີດມາຈົນຈົບປະຖົມສົມບູນ; ຈາກນັ້ນ, ໃນປີ 1920 ປະທານ ສຸພານຸວົງ ໄດ້ໄປຮຽນຕໍ່ຢູ່ມັດ “ອານແບກຊາໂຣ” ທີ່ຮ່າໂນ້ຍ ປະເທດຫວຽດນາມ. ຢູ່ທີ່ນັ້ນເພິ່ນໄດ້ຕັ້ງໃຈຮຽນທັງວິຊາທຳມະຊາດ ແລະ ສັງຄົມ, ຮຽນພາສາຕ່າງປະເທດຫລາຍພາສາ, ຮຽນທາງດ້ານສິລະປະ ແລະ ວັນນະຄະດີ, ທັງຫລິ້ນກິລາ ແລະ ດົນຕີ, ປະທານ ສຸພານຸວົງ ຍັງເປັນຜູ້ມີພອນສະຫວັນໃນດ້ານການແຕ້ມຮູບ ແລະ ຂຽນບົດກາວີ. ເພິ່ນໄດ້ຮຽນຈົບຂະແໜງວິຊາວິທະຍາສາດ ແລະ ອັກສອນສາດ ດ້ວຍຄະແນນດີເລີດ ແລະ ຖືກຄັດເລືອກເປັນນັກຮຽນດີເດັ່ນຂອງໂຮງຮຽນໂປຣເຕັກໂຕຣາແຫ່ງແຄວ້ນອິນດູຈີນ. ຕໍ່ມາໃນປີ 1931 ປະທານ ສຸພານຸວົງ ໄດ້ໄປສຶກສາຕໍ່ຢູ່ປະເທດຝຣັ່ງ ແລະ ໄດ້ເຂົ້າຮຽນກຽມທີ່ວິທະຍາໄລແຊັງຫລຸຍ (Lycee Saint-Louis), ຫລັງຈາກນັ້ນ, ໃນປີ 1934 ໄດ້ເຂົ້າຮຽນຕໍ່ມະຫາວິທະຍາໄລຂົວທາງແຫ່ງຊາດ (EcoleNationale des Ponts et Chauss’es) ສາຂາວິສະວະກອນພົນລະເຮືອນ.

ເວລາຮຽນຢູ່ມະຫາວິທະຍາໄລຂົວທາງແຫ່ງຊາດຝຣັ່ງ, ປະທານ ສຸພານຸວົງ ບໍ່ພຽງແຕ່ມີຄວາມມຸ່ງໝັ້ນໃນການຮຽນເທົ່ານັ້ນ, ເພິ່ນທັງມີຄວາມດຸໝັ່ນໃນການລົງເຝິກຫັດ-ປະຕິບັດຕົວຈິງ; ດັ່ງນັ້ນ ເພິ່ນຈຶ່ງໄດ້ເດີນທາງໄປຫລາຍປະເທດໃນທະວີບເອີຣົບ ທັງເບື້ອງຕາເວັນອອກ ແລະ ຕາເວັນຕົກ; ນອກຈາກນີ້, ເພິ່ນຍັງໄດ້ໄປຫລາຍປະເທດໃນທະວີບອາຟຣິກາ ເພື່ອສຳຜັດກັບຄວາມເປັນຈິງ ແລະ ຊອກຮູ້ປະສົບການໃນດ້ານຕ່າງໆ; ປະທານ ສຸພານຸວົງ ທັງມີຄວາມບາກບັ່ນ



ໃນການຄົ້ນຄວ້າຮ່ຳຮຽນ, ທັງມີຄວາມເປັນເຈົ້າການປະດິດສ້າງຮຽນຮູ້ດ້ວຍຕົນເອງ; ເພິ່ນດຳລົງຊີວິດແບບຮຽບງ່າຍ, ບໍ່ຟູມເຟືອຍ. ປະທານ ສຸພານຸວົງ ມີພອນສະຫວັນໃນການຮຽນຮູ້ພາສາຂອງຊາດຕ່າງໆ ເຊິ່ງເພິ່ນສາມາດເວົ້າໄດ້ດີເຖິງ 7-8 ພາສາທີ່ໃຊ້ກັນແຜ່ຫລາຍໃນສາກົນ. ໃນປີ 1937 ປະທານ ສຸພານຸວົງ ໄດ້ຮຽນຈົບມະຫາວິທະຍາໄລຂົວທາງແຫ່ງຊາດທີ່ປະເທດຝຣັ່ງ ໂດຍໄດ້ຮັບປະກາດສະນິຍະບັດວິສະວະ ກອນຂົວທາງເປັນຄົນທຳອິດຂອງປະເທດລາວ.

ພາຍຫລັງສຳເລັດການສຶກສາເພິ່ນໄດ້ກັບຄືນອິນດູຈີນ ໂດຍໄດ້ຮັບລາຊະການໃນຂະແໜງໂຍທາທິການ ປະຈຳຢູ່ຍາຈາງ (ແຄວ້ນໂຍທາທີສອງຂອງອານນາມ). ໃນປີ 1938 ປະທານ ສຸພານຸວົງ ໄດ້ສ້າງຄອບຄົວກັບນາງ ຫວຽນທິກີ່ນາມ (ປ້າ ວຽງຄຳ ສຸພານຸວົງ) ເຊິ່ງເປັນບຸດສາວຂອງທ່ານ ຫງວຽນວັນສຸງ ແລະ ນາງ ເລທິແງ້. ເວລາທີ່ເພິ່ນຮັບຜິດ ຊອບວຽກງານປະຈຳຢູ່ຍາຈາງນັ້ນ, ປະທານ ສຸພານຸວົງ ໄດ້ສຳເລັດການສ້າງຂົວທາງເລກທີ 14, ໂຄງການເຂື່ອນໄຟຟ້ານ້ຳຕົກຢູ່ດາຍົນ, ສ້າງຝາຍ ແລະ ເໝືອງບາຍເຖື້ອງ ຢູ່ແຂວງທັນຮວາ ປະເທດຫວຽດນາມ; ໄດ້ໄປຊ່ວຍສ້າງຂົວ ແລະ ສ້ອມແປງທາງເລກທີ 13 ຢູ່ແຂວງຊຽງແຕງ ປະເທດກຳປູເຈຍ. ຕໍ່ມາປະທານ ສຸພານຸວົງ ໄດ້ຖືກແຕ່ງຕັ້ງໄປຮັບຣາຊະການຢູ່ເມືອງພົນ ແຂວງສະຫວັນນະເຂດ ເພື່ອສ້າງທາງເລກທີ 23 ແລະ ຂົວເຊບັ້ງຫຽງ. ປີ 1942 ທ່ານໄດ້ກັບໄປຮັບໜ້າທີ່ຣາຊະການທີ່ເມືອງວິນ ປະເທດຫວຽດນາມ. ໃນເວລາປະຕິບັດໜ້າທີ່ຣາຊະການຢູ່ຫວຽດນາມ, ກຳປູເຈຍ ແລະ ລາວ, ປະທານ ສຸພານຸວົງ ໄດ້ສ້າງຜົນງານຫລາຍຢ່າງ ອັນເປັນທີ່ຍອມຮັບໃນຖານະວິສະວະກອນທີ່ມີຄວາມຮູ້ຄວາມສາມາດ ແລະ ເຮັດແທ້ທຳຈິງ. ສິ່ງສຳຄັນທີ່ສຸດເພິ່ນໄດ້ສຳຜັດ, ໄດ້ຮູ້ໄດ້ເຫັນເຖິງພຶດຕິກຳ ແລະ ການກະທຳຂອງພວກຈັກກະພັດລ່າເມືອງຂຶ້ນຝຣັ່ງທີ່ມີຕໍ່ຄົນຂອງຊາດຫົວເມືອງຂຶ້ນ ເຊັ່ນ: ການຈຳແນກເຊື້ອຊາດ ແລະ ການແບ່ງຊັ້ນວັນນະ; ການກົດຂີ່ຂົ່ມເຫັງ ແລະ ຄວາມຍຸຕິທຳ; ການປຸ້ນສະດົມ ແລະ ການກົດຂີ່ຂູດຮີດ ເປັນຕົ້ນ.

ທັງໝົດເຫລົ່ານັ້ນ ໄດ້ສົ່ງຜົນກະທົບໂດຍກົງຕໍ່ສະພາບແນວຄິດຈິດໃຈຂອງປະທານ ສຸພານຸວົງ ແລະ ຈຳໃຫ້ເພິ່ນຕ້ອງເລືອກເອົາເສັ້ນທາງເດີນແຫ່ງຊີວິດ ຄື: ສືບຕໍ່ເປັນຂ້າຣາຊະການຮັບໃຊ້ເຈດຈຳນົງຂອງພວກຈັກກະພັດລ່າເມືອງຂຶ້ນ ຫລື ກ້າວສູ່ເສັ້ນທາງແຫ່ງການຕໍ່ສູ້ເອົາຄວາມເອກະລາດມາໃຫ້ປະເທດຊາດ, ນຳເອົາອິດສະຫລະພາບ ແລະ ສິດເປັນເຈົ້າມາໃຫ້ປະຊາຊົນລາວເຜົ່າຕ່າງໆ ເຊິ່ງປະທານ ສຸພານຸວົງ ໄດ້ເລືອກເອົາອັນທີສອງ. ໃນເດືອນຕຸລາ ປີ 1945 ປະທານ ສຸພານຸວົງ ໄດ້ເດີນທາງກັບຄືນປະເທດຕາມທາງເລກ 9, ເມື່ອຮອດເມືອງເຊໂປນ ປະທານ ສຸພານຸວົງ ໄດ້ກ່າວຄຳປາໄສຕໍ່ປະຊາຊົນທີ່ມາໂຮມກັນຢູ່ທີ່ນັ້ນຢ່າງຫລວງຫລາຍເພື່ອຕ້ອນຮັບເພິ່ນວ່າ “ແຜ່ນດິນລາວ ຕ້ອງແມ່ນຄົນລາວເປັນເຈົ້າຂອງ”.

ປະທານ ສຸພານຸວົງ ເຄີຍໄດ້ບັນທຶກຄວາມຊົງຈຳຂອງເພິ່ນເປັນຂໍ້ຄວາມຕອນໜຶ່ງໄວ້ດັ່ງນີ້: “ສະເພາະຂ້າພະເຈົ້າແລ້ວ ຕັ້ງແຕ່ອາຍຸ 13 ປີ ຂ້າພະເຈົ້າໄດ້ຕັດສິນໃຈວ່າ ເຖິງຈະເສຍຄ່າແພງທໍ່ໃດກໍຕາມ ຂ້າພະເຈົ້າກໍຈະຕ້ອງປະລະນິໄສທີ່ປ່ອຍປະລະເລີຍໃຫ້ໄປຕາມບຸນຕາມກຳ ຂີ້ຄ້ານ ມັກງ່າຍ ອີແຕ່ເວົ້າເປັນໃຫຍ່ ເຊິ່ງແມ່ນຈຸດພິເສດຂອງສັງຄົມເຮົາ ແລະ ຂອງບັນດາຊາດທີ່ຊຸດໂຊມ ອັນຈະຕ້ອງກາຍເປັນເຫຍື່ອໃຫ້ແກ່ຝູງສັດຮ້າຍໃນທີ່ສຸດ” ຄຳເວົ້າເຫລົ່ານີ້ຊ່ວຍຢືນຢັນໄດ້ວ່າ ປະທານ ສຸພານຸວົງ ໄດ້ເລືອກເສັ້ນທາງຊີວິດ ແລະ ພາລະ ກິດອັນຍິ່ງໃຫຍ່ຂອງເພິ່ນໄວ້ແຕ່ດົນພຸ້ນແລ້ວ.

(ຄັດຈາກປຶ້ມ ຊີວິດ ແລະ ພາລະກິດ ຂອງປະທານ ສຸພານຸວົງ 2004)




# ຄອງຊີວິດດ້ວຍຫລັກທຳມະ

ໂດຍ: ດົ້ນກົບເມກ

ບົດກ່ອນຜູ້ຂຽນໄດ້ຂຽນຫລັກທຳມະກ່ຽວກັບການຮ່ວມງານໃນຫ້ອງການ ຫລືວ່າສຳນັກງານເພື່ອໃຫ້ເກີດຄວາມສາມັກຄີເປັນການສ້າງບັນຍາກາດໃຫ້ແກ່ການຮ່ວມງານພາຍໃນສຳນັກງານດຽວກັນ ເຊິ່ງໃນບົດນີ້ຜູ້ຂຽນຈຶ່ງນຳເອົາຫລັກທຳມະ 8 ປະການຈັດແບ່ງເປັນ 4 ຄູ່ມານຳສະເໜີແກ່ທ່ານຜູ້ອ່ານ ເພາະເຫັນວ່າຫລັກທຳມະ 8 ປະການນີ້ສຳຄັນຫລາຍຕໍ່ການດຳເນີນຊີວິດໃນຍຸກປັດຈຸບັນນັ້ນທີ່ຕົກຢູ່ໃນສະພາບເສດຖະກິດຝືດເຄືອງໃນຫລາຍເງື່ອນໄຂເຮົາຕ້ອງຍອມຮັບໃນຄວາມເປັນຈິງຂອງໂລກ.

ຫລັກທຳມະ 8 ປະການນີ້ແມ່ນເພື່ອຊ່ວຍໃຫ້ຫລາຍຄົນມີສະຕິເມື່ອໄດ້ອ່ານ ແລະ ນຳໄປຄົ້ນຄິດພິຈາລະນາໄດ້ແກ່:

1) ໄດ້ລາບເສື່ອມລາບ: ຫມາຍເຖິງບາງຄົນເກີດມາລວຍ ແຕ່ຈົນພາຍຫລັງກໍມີ ຫລື ບາງຄົນເກີດມາຈົນລວຍພາຍຫລັງກໍມີ

2) ໄດ້ຍົດເສື່ອມຍົດ: ຊື່ສຽງກຽດຕິຍົດຕຳແໜ່ງໜ້າທີ່ວຽກງານ, ໄດ້ຮັບຄວາມເຄົາລົບຈາກສັງຄົມແຕ່ເຖິງມື້ໜຶ່ງກໍມີເວລາເສື່ອມຂອງມັນ.

3) ນິນທາສັນລະເສີນ: ຄົນເຮົາເມື່ອປະພຶດໂຕຢ່າງໜຶ່ງມີທັງຄົນຮັກ ແລະ ຄົນຊັງ ໃຫ້ຖືວ່າເປັນຂອງປົກກະຕິຂອງໂລກ.

4) ສຸກ ແລະ ທຸກ ເປັນຂອງຄູ່ກັນ: ຊີວິດຈິງຂອງຄົນມີທັງສຸກ ແລະ ທຸກປະປົນກັນໄປຖ້າໃຜສະຫລາດກໍຈະມີຄວາມສຸກຫລາຍກວ່າ.

ຫລັກທຳມະ 8 ປະການແບ່ງເປັນ 4 ຄູ່ຖືເປັນທຳມະປະຈຳໂລກທີ່ຊີວິດຕ້ອງໄດ້ພົບພໍ້ຕ່າງແຕ່ວ່າຄົນເຮົາຈະທຳໃຈໄດ້ ຫລື ບໍ່? ຫລືວ່າ ຜູ້ກ່ຽວຈະຮູ້ທັນ ຫລື ບໍ່? ເພາະວ່າຫລາຍຄົນເວລາຊີວິດຈະເລີນຂຶ້ນສູງຈົນຫລົງໃນລາບຍົດກຽດສັກສີຊື່ສຽງເບິ່ງຄືວ່າ ຊີວິດລືມຄວາມຕາຍໄປພຸ້ນແຫລະ! ບາດເຖິງຂາລົງມີຫລາຍຄົນກໍນັ່ງເຫງົາກອດເຂົ່າຢູ່ເຮືອນ, ພັກພວກ-ລູກນ້ອງທີ່ເຄີຍແຫ່ແໜ່ນຕ່າງກໍຫາຍໜ້າໝົດໝົດ, ຄົນທີ່ເຄີຍຄ່ອຍເອົາໃຈຕອນມີຍົດຕຳແໜ່ງກໍຫລຽວບໍ່ເຫັນໜ້າ ນີ້ຄືສັດຈະທຳຂອງຊີວິດທີ່ຄົນເຮົາຕ້ອງໄດ້ມີສະຕິລະນຶກໄວ້ ວ່າການສ້າງຄວາມດີໄວ້ກັບຄົນອ້ອມຂ້າງ-ລູກນ້ອງ ເມື່ອເຮົາບຳນານໄປແລ້ວເຂົາກໍຍັງຈະຄິດຮອດຄິດເຖິງ ແຕ່ຖ້າໃຜມີມາດໃຫຍ່ຕອນຢູ່ໃນຕຳແໜ່ງບາດອອກການໄປຄົນເຂົາກໍເບະສົບໃສ່ກໍມີ.

ນີ້ແຫລະຊີວິດຕ້ອງມີທຳມະຄອງໃຈບໍໃຫ້ຫລົງໃນຍົດຕຳແໜ່ງ...!

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 71 ການຍົກເລີກການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ດຳເນີນທຸລະກິດໂດຍມີເຫດຜົນພຽງພໍ;
2. ຜູ້ດຳເນີນທຸລະກິດ ລະເມີດກົດໝາຍ ແລະ ສ້າງຜົນເສຍຫາຍ ຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງ ແວດລ້ອມຢ່າງຮ້າຍແຮງ;
3. ບໍ່ແກ້ໄຂ ຫຼື ປັບປຸງ ຕາມກຳນົດເວລາໃນການສັ່ງໂຈະ;
4. ຖືກຖອນໃບອະນຸຍາດດຳເນີນທຸລະກິດ;
5. ສານຕັດສິນໃຫ້ລົ້ມລະລາຍ.

## ພາກທີ IX
## ສະມາຄົມທຸລະກິດຍານພາຫະນະທາງບົກ

ມາດຕາ 72 ສະມາຄົມທຸລະກິດຍານພາຫະນະທາງບົກ

ສະມາຄົມທຸລະກິດຍານພາຫະນະທາງບົກ ແມ່ນ ອົງການຈັດຕັ້ງສັງຄົມ ທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອເຕົ້າໂຮມ ເອົາບັນດາຫົວໜ່ວຍທຸລະກິດຍານພາຫະນະທາງບົກປະເພດດຽວກັນ ຫຼື ໃກ້ຄຽງກັນ, ມີພາລະບົດບາດປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາວຽກງານຍານພາຫະນະທາງບົກ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງສະມາຄົມທຸລະກິດຍານພາຫະນະທາງບົກ**

ສະມາຄົມທຸລະກິດຍານພາຫະນະທາງບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ນິຕິກຳ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຍານພາຫະນະທາງບົກໃຫ້ສະມາຊິກ;
2. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບຍານພາຫະນະທາງບົກ;
3. ເປັນຂົວຕໍ່ລະຫວ່າງອົງການຄຸ້ມຄອງ ແລະ ກວດກາ ວຽກງານຍານ ພາຫະນະທາງບົກ ແລະ ສະ ມາຊິກ;
4. ໄດ້ຮັບຂໍ້ມູນຈາກສະມາຊິກຂອງສະມາຄົມ ແລະ ອົງການຄຸ້ມຄອງ ແລະ ກວດກາ ວຽກງານຍານ ພາຫະນະທາງບົກ;
5. ຕິດຕາມການເຄື່ອນໄຫວຂອງສະມາຊິກໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະ ບຽບການ;
6. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;
7. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວທຸລະກິດ, ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງສະມາຄົມຂອງຕົນ ຕໍ່ອົງການຄຸ້ມຄອງ ແລະ ກວດກາວຽກງານຍານພາຫະນະທາງບົກ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 74 ການສ້າງຕັ້ງ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມທຸລະກິດຍານພາຫະນະທາງບົກ**

ຂັ້ນຕອນການສ້າງຕັ້ງ ສະມາຄົມທຸລະກິດຍານພາຫະນະທາງບົກ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ສຳລັບ ໂຄງປະກອບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ ທຸລະກິດຍານພາຫະນະທາງ ບົກ ລວມທັງລະບອບແບບແຜນວິທີເຮັດວຽກ ໄດ້ກຳນົດໄວ້ໃນກົດລະບຽບຂອງສະມາຄົມ.

## ພາກທີ X
## ຂໍ້ຫ້າມ

**ມາດຕາ 75 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງ, ປົດບັງ, ປ່ຽນ, ສັບປ່ຽນ ປ້າຍທະບຽນຍານພາຫະນະ;
3. ຕໍ່ເຕີມ ແລະ ດັດແປງເຕັກນິກລົດ ໂດຍບໍ່ໄດ້ຮັບອະນຸຍາດ;
4. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ການຮ່ວມມືໃນການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
6. ນຳໃຊ້ຍານພາຫະນະທາງບົກ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນຍານພາຫະນະບໍ່ຖືກ ຕ້ອງຕາມກົດໝາຍ;
7. ນຳໃຊ້ຍານພາຫະນະທາງບົກ ທີ່ຕິດປ້າຍບໍລິຫານຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງຕາມເປົ້າໝາຍ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 76 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ຫ້າມ ຜູ້ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງຕາມກົດໝາຍ;
2. ສົມຮູ້ຮ່ວມຄິດ, ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຂອງລັດ;
3. ລາຍງານຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຕົນບໍ່ຖືກຕ້ອງ;
4. ປົດບັງ, ປອມແປງ, ບິດເບືອນ ແລະ ທຳລາຍ ຂໍ້ມູນກ່ຽວກັບການດຳເນີນທຸລະກິດຂອງຕົນ;
5. ບໍ່ໃຫ້ຄວາມຮ່ວມມື, ໝິ່ນປະໝາດ, ນາບຂູ່ ແລະ ທຳຮ້າຍຮ່າງກາຍເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 77 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນຮຸ້ນສ່ວນ, ເປັນນັກວິຊາການໃຫ້ວິສາຫະກິດກ່ຽວກັບຍານພາຫະນະທາງບົກທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;
2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;
3. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານກ່ຽວກັບຍານພາຫະນະທາບົກ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ;
4. ຂຶ້ນທະບຽນ, ອອກປ້າຍທະບຽນ ຍານພາຫະນະທາງບົກ ໂດຍບໍ່ຖືກຕ້ອງຕາມປະເພດ ແລະ ກົດໝາຍ;
5. ຂຶ້ນທະບຽນຍານພາຫະນະທາງບົກທີ່ດັດແປງ ຮູບຮ່າງ ແລະ ເຕັກນິກໂດຍບໍ່ໄດ້ຮັບອະນຸຍາດ;
6. ໝິ່ນປະໝາດ, ໃຊ້ວາຈາ, ທ່າທີບໍ່ສຸພາບ ແລະ ນາບຂູ່ ບຸກຄົນທີ່ມາໃຊ້ບໍລິການ ກໍຄືຜູ້ຊົມໃຊ້ຍານພາຫະນະທາງບົກ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ອ່ານຕໍ່ສະບັບໜ້າ...







**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ